ດັດແປງໃໝ່

# ຂໍ້
# ພື້ນຖານຂອງການເບິ່ງແຍງດູແລ

# ຄໍາສັບ

## A

| ຄໍາສັບ | ການຕີຄວາມໝາຍ |
|---|---|
| ການປະຖິ້ມ | ການປະໄວ້ ຫລື ການໜີປະຄົນໃດຄົນນຶ່ງໂດຍປາສຈາກຫົນທາງທີ່ຈະເບິ່ງແຍງດູແລຕົວເອົາເຈົ້າເອງ |
| ທ້ອງ | ເຄິ່ງທາງລຸ່ມຂອງລໍາຕົວຂອງຮ່າງກາຍ |
| ການກົດຂີ່ຂົ່ມເຫັງ | ການກະທໍາ ຫລື ການບໍ່ກະທໍາໂດຍຈງດຕະນາຊຶ່ງນໍາພາໄປສູ່ອັນຕະຣາຍ |
| ການຟັງຢ່າງຈິງຈັງ | ຫົນທາງນຶ່ງຂອງການຟັງຊຶ່ງຕັ້ງໃຈໃສ່ທັງໝົດອີກຄົນນຶ່ງ ແລະ ໃຫ້ແນ່ໃຈວ່າທ່ານເຂົ້າໃຈໃນສິ່ງທີ່ຖືກເວົ້າອອກມາ |
| ກິຈກັມຂອງການດໍາຣົງຊີວິດປະຈໍາວັນ (ADLs) | ກິຈກັມການເບິ່ງແຍງດູແລສ່ວນຕົວໃນແຕ່ລະວັນ, ລວມເອົາການອາບນໍ້າ, ການເຂົ້າຫ້ອງນໍ້າ, ການນຸ່ງເຄື່ອງ, ການຕົບແຕ່ງຕົວ, ການອະນາມັຍ, ການເຄື່ອນໄຫວໄປມາ ແລະ ການກິນອາຫານ |
| ຄວບຄຸມເບິ່ງນໍາ | ເພື່ອຈະເອົາໃຫ້ ຫລື ໃຊ້ສິ່ງໃດສິ່ງນຶ່ງໃຫ້ຄົນໃດຄົນນຶ່ງ |
| ຄໍາຊີ້ນໍາລ່ວງໜ້າ | ໃບໜັງສືຄໍາຊີ້ນໍາຊຶ່ງອະທິບາຍຈຸດປະສົງຂອງບຸກຄົນກ່ຽວກັບການຕັດສິນໃຈທາງດ້ານພະຍາບານແລະສິ່ງທີ່ຕ້ອງໄດ້ເຮັດຢູ່ໃນເຫດການທີ່ເຂົາເຈົ້າກາຍເປັນຜູ້ບໍ່ສາມາດທີ່ຈະທໍາການຕັດສິນໃຈໃຫ້ເຂົາເຈົ້າເອງໄດ້ |
| Adult Family Home | ການອາສັຍຢູ່ໃນເຮືອນ, ເປັນກຸ່ມ 2 - 6 ຄົນ,ຊຶ່ງໄດ້ຮັບອະນຸມັດໃຫ້ໄດ້ຮັບການເບິ່ງແຍງດູແລໃຫ້ຕະລອດ 24 ຊົ່ວໂມງ. |
| ສະນັບສະນູນ | ເພື່ອຈະອູ້ມຊູ ຫລື ທໍາການກະທໍາໃຫ້ຄົນໃດຄົນນຶ່ງ ຫລື ສິ່ງໃດສິ່ງນຶ່ງ |
| ການແກ່ອາຍຸ | ການດໍາເນີນການແກ່ອາຍຸທາງດ້ານຮ່າງກາຍ ແລະ ຈິດໃຈ |
| AIDS<br>(ໂຣກພູມຄຸ້ມກັນບົກພ່ອງ) | ພະຍາດທີ່ໂຈມຕີຣະບົບພູມຄຸ້ມກັນຂອງຮ່າງກາຍ, ການກີດກັ້ນຮ່າງກາຍຈາກການຕໍ່ສູ້ນໍາການຕິດເຊື້ອໂຣກ |
| ການແຈກກະຈາຍທາງອາກາດ | ການສັມຜັດນໍາພະຍາດຕິດຕໍ່ທາງອາກາດ |
| ໂຣກແພ້ສິ່ງຕ່າງໆ | ຄວາມຮູ້ສຶກໄວສູງ ແລະ ປະຕິກິຣິຍາຕໍ່ທາດບາງຢ່າງ (ເຊັ່ນວ່າອາຫານບາງຢ່າງ, ຝຸ່ນເກສອນດອກໄມ້, ໄລເຜິ້ງຕອດ) |
| ພະຍາດອອລຊາຍເມີ Alzheimer | ໂຣກໃນສະມອງທີ່ຄືບໜ້າ, ເຊື່ອມໂຊມ ຊຶ່ງສະທ້ອນເຖິງຄວາມຊົງຈໍາ, ການຕັດສິນໃຈ, ແລະ ບຸກຄະລິກພາບ |
| ການຍ້າຍວົນວຽນໄປມາ | ການດໍາເນີນການຍ່າງ ຫລື ເຄື່ອນຍ້າຍໄປມາ |
| ຂອງຂວັນຈາກຮ່າງກາຍ | ຄໍາຊີ້ນໍາລ່ວງໜ້າຊຶ່ງກ່າວເຈາະຈົງວ່າພາກສ່ວນຂອງຮ່າງກາຍຂອງຄົນອັນໃດຈະຖືກໃຊ້, ຫລັງຈາກການເສັຽຊີວິດ, ສໍາລັບຈຸດປະສົງຂອງການຜ່າຕັດປ່ຽນອະວັຍຍະວະຫລືການຄົ້ນຄົ້ວ |
| ເຣື່ອງກ່ຽວກັບຮ່າງກາຍ | ໂຄງຮ່າງຂອງຕົນຕົວ |
| ບໍ່ອອກນາມ | ບໍ່ບອກຊື່ ຫລື ຊີ້ບອກຕົວ |

| | |
|---|---|
| ພະແນກ APS | ພະແນກປ້ອງກັນຜູ້ໃຫຍ່, ຫນ່ວຍນຶ່ງຢູ່ພາຍໃນກົມ DSHS ທີ່ຮັບເອົາສາຍໂທເຂົ້າມາ ແລະ ສືບສວນການກົດຂີ່ຂົ່ມເຫັງທີ່ນ່າສົງສັຍຢູ່ໃນເຮືອນຂອງຕົນເອງ ຫລື ຫ້ອງອາພັດເມັນຂອງບຸກຄົນ |
| ການຫາຍໃຈ | ການສືບຫາຍໃຈສິ່ງເປັນຂອງແຂງ ຫລື ນ້ຳເຂົ້າໄປຫາປອດ |
| ການໂຈມຕີ | ການໂຈມຕີສ່ວນຕົວທີ່ຜິດກົດຫມາຍ |
| ການສະແດງອອກທີ່ເຫມາະສົມ | ການປະພຶດຕົວຢ່າງຫມັ້ນໃຈ, ບໍ່ຢ້ານກົວທີ່ຈະເວົ້າກ່ຽວກັບສິ່ງທີ່ຄົນນຶ່ງຕ້ອງການ ຫລື ເຊື່ອ |
| ການປະເມີນຜົນ | ການເກັບກຳເອົາຣາຍຣະອຽດເພື່ອຈະພິຈາຣະນາເບິ່ງວ່າຄວາມຊ່ວຍເຫລືອແນວໃດແດ່ທີ່ລູກຄ້າຕ້ອງການ |
| ຣາຍຣະອຽດຂອງການປະເມີນຜົນ | ພາກສ່ວນນຶ່ງຂອງແຜນການເບິ່ງແຍງດູແລຂອງກົມ DSHS ຊຶ່ງບັນຣະຍາຍຄວາມເຂັ້ມແຂງ, ຂອບເຂດ, ແລະ ຄວາມມັກຫລາຍກ່ວາໃນພາລະກິດການເບິ່ງແຍງດູແລ, ແລະ ໃຫ້ຄຳຊີ້ນຳສຳລັບຜູ້ໃຫ້ການເບິ່ງແຍງດູແລອັນເຈາະຈົງ |
| ເຄື່ອງຈັກຊ່ວຍເຫລືອ | ອຸບປະກອນທີ່ຊ່ວຍບຸກຄົນໃຫ້ປະຕິບັດຫນ້າທີ່ ແລະ ຮັກສາ ຫລື ໄດ້ຄວາມເປັນອິດສະຣະພາບກັບຄືນມາ |
| ຄວາມຜິດປົກກະຕິທາງການສື່ສານ ຫລື ອາຣົມ | ພະຍາດຂອງສະມອງຊຶ່ງອາດຈະເຮັດໃຫ້ເສັຽຫາຍຢ່າງຮ້າຍແຮງໃນຄວາມສາມາດໃນການປາກເວົ້າ ຫລື ຄວາມສາມາດທີ່ຈະຕິດຕໍ່ປາກເວົ້ານຳຄົນອື່ນ |

# B

| | |
|---|---|
| ບັກເທເຣັຽ | ສິ່ງທີ່ມີຊີວິດນ້ອຍໆຕໍ່ກ້ອງຈຸນລະທັດ (ເຊື້ອໂຣກ) , ຊຶ່ງສາມາດກໍ່ໃຫ້ເກີດເປັນພະຍາດ |
| Baseline | ຣະດັບຂອງການທຳງານ “ຕາມປົກກະຕິ” ຂອງບຸກຄົນ (ທາງຮ່າງກາຍ,  ຄວາມຮູ້ສຶກ, ຈິດໃຈ, ແລະ ສັງຄົມ) |
| ການນອນຢູ່ໃນຕຽງນອນ | ນອນຢຽດຫລືນອນຫລັບຢູ່ແຕ່ໃນຕຽງເທົ່ານັ້ນ |
| Bedpan | ອ່າງທີ່ຖືກໃຊ້ເພື່ອຈະເກັບເອົານ້ຳຍ່ຽວ ແລະ/ຫລື ຂີ້ໃນຂະນະທີ່ນອນຢູ່ແຕ່ໃນຕຽງ |
| ຄວາມເຊື່ອຖື | ທັດສະນະ, ຄວາມຮູ້ສຶກ, ແລະ ຄວາມຄິດຄວາມເຫັນຂອງບຸກຄົນ |
| ຄວາມລຳອຽງ | ຄວາມຄິດຄວາມເຫັນຊຶ່ງມີອິດທິພົນເຖິງການຕັດສິນຂອງທ່ານ |
| ອັນຕະຣາຍຈາກສິ່ງທີ່ມີຊີວິດ | ການສ່ຽງຕໍ່ອັນຕະຣາຍຊຶ່ງເກີດມາຈາກສິ່ງທີ່ມີຊີວິດບາງຊະນິດ ແລະ/ຫລື ຂອງເສດເຫລືອຂອງມັນ |
| ພະຍາດຂຶ້ນນຳຄວາມຮູ້ສຶກ | ຍັງເປັນທີ່ຮູ້ຈັກກັນອີກວ່າແມ່ນການເຈັບປ່ວຍຮ້າຍ. ພະຍາດຂຶ້ນນຳຄວາມຮູ້ສຶກຊຶ່ງຖືກສະແດງອອກມາໂດຍອາຣົມລ່າເລີງ ຫລື ຕື່ນເຕັ້ນໃນບາງເວລາ,ຊຶ່ງວ່າເວລາອື່ນທີ່ສະແດງອາຣົມໂສກເສົ້າ ຫລື ອຸກອັ່ງ |
| ພົກຍ່ຽວ | ຖົງຄ້າຍຄືອະວັຍຍະວະທີ່ກັກເອົານ້ຳຍ່ຽວໄວ້ກ່ອນທີ່ມັນຈະຖືກຖ່າຍເທອອກໄປ |
| ພະຍາດຖ່າຍທອດທາງເລືອດ | ພະຍາດທີ່ກໍ່ໃຫ້ເກີດມີເຊື້ອໂຣກທີ່ແຜ່ພາຍໂດຍຜ່ານການສັມຜັດນຳເລືອດ |
| ຄວາມດັນຂອງເລືອດ | ຈຳນວນຂອງຄວາມກົດດັນທີ່ຖືກແຫຍ້ໃສ່ຝາຂອງເສັ້ນເລືອດເມື່ອເວລາຫົວໃຈປ້ຳເລືອດຢູ່ |
| Boarding Home | ສະຖານທີ່ໃຫຍ່ຢູ່ຕາມເຮືອນທີ່ໄດ້ຮັບອະນຸຍາດໃຫ້ເບິ່ງແຍງດູແລຄົນ 7 ຄົນ ຫລື ຫລາຍກວ່ານັ້ນ |

| | |
|---|---|
| ການບົວລະບັດຮ່າງກາຍ | ການຊ່ວຍເຫລືອລູກຄ້າດ້ວຍການອອກກຳລັງກາຍ, ການບົວລະບັດຜິວໜັງ, ລວມທັງການທາຢານ້ຳມັນ ຫລື ໂລເຊິນ ທີ່ບໍ່ຖືກສັ່ງຊື້ຈາກທ່ານໝໍ, ແລະ ການປ່ຽນຜ້າພັນບາດແຫ້ງ |
| ພາສາຂອງຮ່າງກາຍ | ສິ່ງທີ່ຖືກຕິດຕໍ່ສື່ສານກັນໂດຍຜ່ານທ່າທາງ, ການວາງຕົວ, ການສະແດງອອກມາທາງໜ້າ ແລະ ການຕິດຕໍ່ທາງສາຍຕາ |
| ວິທີການເຮັດໃຫ້ສຳເຣັດຂອງຮ່າງກາຍ | ຫົນທາງຂອງການລຸກຂຶ້ນ, ເພື່ອຫລີກເວັ້ນການບາດເຈັບ |
| ລະບົບຂອງຮ່າງກາຍ | ຫົນທາງທີ່ຮ່າງກາຍເຮັດວຽກເພື່ອຈະປະຕິບັດໜ້າທີ່ສຳຄັນ, ຕົວຢ່າງຈະແມ່ນລະບົບການເດີນໝູນວຽນນຳຫົວໃຈ, ເສັ້ນເລືອດ ແລະ ເລືອດ |
| ບ່ອນໃຂ່ຂື້ນບ່ອນທີ່ກະດູກຊີ້ອອກ | ບ່ອນຂອງຮ່າງກາຍບ່ອນທີ່ກະດູກຢູ່ໃກ້ກັນກັບໜ້າພຽງຂອງຜິວໜັງ, ແລະ ບ່ອນກະດູກຊີ້ອອກມາ, ລວມທັງແຂນສອກ, ຫົວເຂົ່າ, ແລະ ກະດູກບ່າໄຫລ່ |
| ການຂັບໄລ່ຂີ້ອອກໄປ | ການດຳເນີນການຂອງການກຳຈັດອາໂຈມ (ຂີ້) ອອກໄປຈາກຮ່າງກາຍ |
| Brainstorming | ການສະເນີຫົນທາງແກ້ໄຂທີ່ອາດຈະເປັນໄປໄດ້ເພື່ອຈະແກ້ໄຂບັນຫາ |
| ຄວາມເບື່ອ | ສະພາບຂອງການໝົດເຫື່ອແຮງທາງດ້ານຮ່າງກາຍ, ຈິດໃຈ ແລະ ມັນສະນອງ |

# C

| | |
|---|---|
| CPR (ການຊ່ວຍຫົວໃຈ ແລະ ປອດໃຫ້ຟື້ນຄືນ) | ວິທີການປະຖົມພະຍາບານສຳລັບການຢຸດຊະງັກທາງຫົວໃຈ ຫລື ການຫາຍໃຈຢ່າງກະທັນຫັນ |
| ແຄລໍຣີ | ການວັດແທກຈຳນວນຂອງພະລັງງານທີ່ອາຫານເອົາໃຫ້ |
| ໂຣກມະເລັງ | ແຊລ໌ທີ່ເປັນພະຍາດ ແລະ ເຕີບໂຕຢ່າງຄວບຄຸມບໍ່ໄດ້, ຂະຫຍາຍຕົວ ແລະ ທຳລາຍເນື້ອ ແລະ ອະວັຍຍະວະທີ່ແຂງແຮງ |
| ໄມ້ຄ້ອນເທົ້າ | ທ່ອນໄມ້ພາຍ່າງທີ່ຖືກໃຊ້ສຳລັບການທຸ່ນທ່ຽງ ຫລື ເພື່ອຈະອູ້ມຊູນ້ຳໜັກ |
| ຄາຣໂບຣາຍເດຣດ | ສານທີ່ເອົາພະລັງງານໃຫ້ແກ່ຮ່າງກາຍ |
| ຫົວໃຈ ແລະ ເສັ້ນເລືອດ | ມີສ່ວນກ່ຽວຂ້ອງນຳຫົວໃຈ, ເລືອດ, ແລະ ເສັ້ນເລືອດ |
| ໂຣກຫົວໃຈ ແລະ ເສັ້ນເລືອດ | ພະຍາດຕ່າງໆທີ່ສະທ້ອນເຖິງຫົວໃຈ ຫລື ເສັ້ນເລືອດຢູ່ໃນຮ່າງກາຍ, ຍັງຖືກເອີ້ນອີກວ່າແມ່ນໂຣກຫົວໃຈ |
| ຜູ້ໃຫ້ການເບິ່ງແຍງດູແລ | ຄົນໃດຄົນນຶ່ງຜູ້ທີ່ເອົາການເບິ່ງແຍງດູແລສ່ວນຕົວໃຫ້, ການອູ້ມຊູ, ແລະ ຄວາມຊ່ວຍເຫລືອໃຫ້ແກ່ຄົນອື່ນອີກ |
| Care plan | ໃບໜັງສືແຜນການທີ່ກ່າວເຖິງທຸກໆຢ່າງທີ່ຄະນະທີມງານເບິ່ງແຍງດູແລຈະຕ້ອງໄດ້ເຮັດເພື່ອຈະອູ້ມຊູລູກຄ້າ |
| ບໍຣິເວນເບິ່ງແຍງດູແລ | ບ່ອນທີ່ລູກຄ້າອາສັຍຢູ່ (ເຮືອນຄອບຄົວຜູ້ໃຫຍ່, ເຮືອນກິນນອນ ຫລື ຢູ່ໃນເຮືອນ) |
| ຄະນະທີມງານເບິ່ງແຍງດູແລ | ທຸກໆຄົນຜູ້ທີ່ເອົາການເບິ່ງແຍງດູແລໃຫ້ສຳລັບລູກຄ້າ, ລວມທັງຜູ້ຊ່ຽວຊານ, ພີ່ນ້ອງ, ແລະ ບຸກຄົນຜູ້ທີ່ຮັບເອົາການເບິ່ງແຍງດູແລ |

| | |
|---|---|
| ຜູ້ຈັດການບັນທຶກ | ບຸກຄົນຜູ້ທີ່ຊ່ວຍເຫລືອລູກຄ້າກຳນົດການບໍລິການທີ່ຕ້ອງການ, ບັນທຶກລົງໄວ້ໃນສຳນວນເອກສານ, ແລະ ເອົາການກຳກັບນຳເອກສານທີ່ດຳເນີນຕໍ່ໄປ |
| ເນື້ອປົ່ງຫຸ້ມໜ່ວຍຕາ | ການມືດມົວໃນແກ້ວຕາ |
| ແຊລ໌ | ໜ່ວຍພື້ນຖານຂອງສິ່ງທີ່ມີຊີວິດທຸກໆຢ່າງ |
| ມັນສະໝອງ | ກ່ຽວພັນນຳມັນສະໝອງ |
| ສະໝອງ | ກ່ຽວຂ້ອງນຳສະໝອງ |
| ອຸບປະຕິເຫດໃນເສັ້ນເລືອດໄປຫາສະໝອງ (CVA) | ເກີດຂຶ້ນເມື່ອມັນມີການຢຸດຂອງເລືອດໄປຫາເນື້ອຂອງສະໝອງໂດຍກ້ອນເລືອດ, ການຕັນຂອງເສັ້ນເລືອດ, ຫລື ການທີ່ເລືອດໄຫລອອກໄປຫາສະໝອງ; ຍັງເປັນທີ່ຮູ້ຈັກກັນອີກວ່າແມ່ນການເປັນອຳມະພາດ ຫລື ການໂຈມຕີສະໝອງ |
| ເຄມີ | ສານ ຫລື ສ່ວນປະກອບ |
| ອັນຕະລາຍເຄມີ | ຜະລິດທະພັນທີ່ມີສ່ວນປະສົມທີ່ເປັນອັນຕະລາຍ |
| ການຮັກສາໂຣກດ້ວຍເຄມີ | ການປິ່ນປົວໂດຍການໃຊ້ຢາ; ສ່ວນຫລາຍແລ້ວຖືກໃຊ້ສຳລັບໂຣກມະເລັງ |
| Choking | ການຕັນທໍ່ລົມຫາຍໃຈໄປຫາປອດດ້ວຍອາຫານ, ສິ່ງຂອງ ຫລື ສິ່ງທີ່ແຕກອອກ |
| ໂຄແລສເຕີໂຣລ | ສານໄຂມັນທີ່ຖືກພົບເຫັນຢູ່ໃນເນື້ອຂອງຮ່າງກາຍ ແລະ ເລືອດ |
| ພະຍາດປອດຕັນຊຳເຮື້ອ (COPD) | ສະພາບຂະຫຍາຍຄືບໜ້າ ແລະ ປິ່ນຄືນບໍ່ໄດ້ ຂອງລະບົບການຫາຍໃຈຊຶ່ງໃນນັ້ນບຸກຄົນຈະມີຄວາມຫຍຸ້ງຍາກນຳການຫາຍໃຈຍ້ອນບັນຫາຢູ່ໃນປອດ |
| ລະບົບການໄຫລວຽນຂອງເລືອດ | ຫົວໃຈ, ເສັ້ນເລືອດ, ເລືອດ, ແລະ ອະວັຍຍະວະທັງໝົດທີ່ປ້ຳ ແລະ ນຳເອົາເລືອດ ແລະ ນ້ຳອື່ນໆໄປທົ່ວຮ່າງກາຍ |
| ລູກຄ້າ | ຈຸດລວມສູນຂອງຄະນະທີມງານເບິ່ງແຍງດູແລ, ບຸກຄົນຜູ້ທີ່ຕ້ອງການຄວາມຊ່ວຍເຫລືອ |
| ຄວາມເຂົ້າໃຈ | ການຄິດ, ການດຳເນີນງານຂອງສະໝອງຂອງການຮູ້ຈັກ |
| ຄວາມເຂົ້າໃຈບໍ່ຄົບຖ້ວນ | ສະພາບທີ່ບຸກຄົນມີຄວາມຫຍຸ້ງຍາກລຳບາກໃນການພິຈາລະນາດຳເນີນລາຍລະອຽດ |
| ຮ່ວມມືກັນ | ຄົນສອງຄົນ ຫລື ຫລາຍກວ່າ ເຮັດວຽກຮ່ວມກັນສຳລັບຈຸດປະສົງພິເສດ |
| ການຜ່າຕັດລຳໃສ້ | ຊ່ອງເປີດຢູ່ໜ້າພຽງຂອງທ້ອງບ່ອນທີ່ລຳໃສ້ໄດ້ຖືກເປີດອອກ ແລະ ນຳພາໄປສູ່ຂ້າງນອກຂອງຮ່າງກາຍ |
| ການໝົດຄວາມຮູ້ສຶກ | ໝົດສະຕິ, ບໍ່ມີຄວາມຮູ້ສຶກ |
| Commode | ຕັ່ງເຄື່ອນທີ່ໄດ້ທີ່ບັນຈຸງັ່ງຽງຕິດນຳເພື່ອຈະເກັບເອົານ້ຳຍ່ຽວ ແລະ/ຫລື ອາຈົມ; ຖືກໃຊ້ແທນທີ່ສ້ວມຖ່າຍ |
| ພະຍາດຕິດຕໍ່ໄດ້ | ພະຍາດຕ່າງໆທີ່ແຜ່ພາຍຈາກຄົນນຶ່ງໄປຫາອີກຄົນນຶ່ງ |
| ການຕິດຕໍ່ສື່ສານ | ການແລກປ່ຽນລາຍລະອຽດໂດຍການເວົ້າລົມ, ການຂຽນ, ການສະແດງທ່າທາງ, ຫລື ການປະພຶດ |
| ການປົກປິດໄວ້ເປັນຄວາມລັບ | ການບໍ່ເປີດເຜີຍລາຍລະອຽດສ່ວນຕົວແນວໃດ |
| ຄວາມສັບສົນ | ບໍ່ແຈ່ມແຈ້ງ ຫລື ບໍ່ແນ່ນອນໃນສະໝອງ |
| ໂຣກຫົວໃຈຕີບຕັນລົ້ມເຫລວ (CHF) | ຫົວໃຈບໍ່ແຂງແຮງພຽງພໍເພື່ອຈະປ້ຳເລືອດໄປທົ່ວຮ່າງກາຍ ແລະ ປ້ຳຄ່ອຍຫລາຍຈົນເລືອດຄ້າງຢູ່ໃນເສັ້ນເລືອດ ແລະ ອະວັຍຍະວະຂອງຮ່າງກາຍ |
| ຄຳຍິນຍອມ | ການອະນຸຍາດ |

| | |
|---|---|
| ຖ້ອງຜູກຖ່າຍບໍ່ອອກ | ການຂັບຖ່າຍຍາກ ຫລື ເຈັບປວດ, ຂີ້ແຂັ່ງ |
| ພະຍາດຕິດຕໍ່ | ແຜ່ພາຍໄດ້ງ່າຍໆຈາກຄົນນຶ່ງໄປຫາອີກຄົນນຶ່ງ |
| ຄວາມປົນເປື້ອນ | ບໍ່ຣິເວນ ຫລື ສິ່ງຂອງທີ່ມີເຊື້ອໂຣກຫລາຍ |
| ການຫົດຕົວຂອງກ້າມເນື້ອ | ເມື່ອເວລາເນື້ອຂອງກ້າມເນື້ອກາຍເປັນຫົດເຂົ້າຍ້ອນກ້າມເນື້ອສະເມັ່ນ ຫລື ການເປັນ ອັມມະພາດ, ບໍ່ວ່າຈະແມ່ນຖາວອນ ຫລື ຊົ່ວຄາວ |
| ຄວາມປົນເປື້ອນໃສ່ກັນແລະກັນ | ເມື່ອເວລາເຊື້ອໂຣກຈາກອາຫານດິບ ຫລື ປົນເປື້ອນ ເຂົ້າໄປຫາອາຫານແນວອື່ນທີ່ບໍ່ທັນ ຖືກປຸງອາຫານເທື່ອ ຫລື ອຸ່ນໃຫ້ຮ້ອນໃຫມ່ ກ່ອນຈະຖືກກິນ |
| ຫນ່ວຍ CRU | ຫນ່ວຍແກ້ໄຂຄວາມຮ້ອງທຸກ, ຫນ່ວຍນຶ່ງຢູ່ພາຍໃນກົມ DSHS ທີ່ຮັບເອົາໂທຣະສັບ ແລະ ສືບສວນການກົດຂີ່ຂົ່ມເຫັງທີ່ນ່າສົງສັຍຢູ່ຕາມເຮືອນຄອບຄົວຜູ້ໃຫຍ່, ເຮືອນກິນນອນ ຫລື ເຮືອນເບິ່ງແຍງຜູ້ເຖົ້າ |
| ໄມ້ເທົ້າຄ້ຳຂີ້ແຮ້ | ສິ່ງອູ້ມຊູທີ່ຖືກໃຊ້ເພື່ອຈະຊ່ວຍເຫລືອໃນການຍ່າງ, ມັນຈະສຸບໃສ່ກ້ອງຂີ້ແຮ້ ແລະ ໂດຍທົ່ວ ໄປແລ້ວຈະຖືກໃຊ້ເປັນຄູ່ |
| ຄວາມເຫັນ | ເພື່ອຈະເຕືອນໃຈ ຫລື ບອກຄົນໃດຄົນນຶ່ງ |
| ເບື້ອງຫລັງວັດທະນະທັມ | ກິຣິຍາທ່າທາງ ແລະ ລັກສະນະສະເພາະຂອງການປະພຶດຂອງກຸ່ມສັງຄົມ ຫລື ອົງການໃດ ອົງການນຶ່ງໂດຍສະເພາະ, ລວມທັງທັດສະນະຄວາມເຫັນກ່ຽວກັບອາຫານ, ເຄື່ອງນຸ່ງ, ສາສະນາ, ຄວາມສັມພັນ ແລະ ບົດບາດຂອງຄອບຄົວ |
| ປະເພນີ | ການປະຕິບັດ ຫລື ຄວາມເຊື່ອຖືທີ່ກໍ່ຕັ້ງມາແຕ່ດົນນານ, ທົນທາງການປະຕິບັດສິ່ງຕ່າງໆ |

# D

| | |
|---|---|
| ເຂດອັນຕະຣາຍ | ເຂດກຳນົດຂອງອຸນຫະພູມທີ່ເຊື້ອໂຣກຂະຍາຍຕົວຢ່າງວ່ອງໄວເມື່ອເວລາອາຫານທີ່ອາດ ຈະເປັນອັນຕະຣາຍຖືກເກັບຮັກສາໄວ້ໃນອຸນຫະພູມນັ້ນ |
| ປວດຖ່າຍ | ມີການເຫນັງຕຶງຢາກປວດຖ່າຍຫນັກ |
| ການເຊື່ອມໂຊມ | ລຸດນ້ອຍຖອຍລົງຈາກສະພາບແຕ່ກ່ອນ ຫລື ປົກກະຕິ |
| ການຂາດນ້ຳ | ບໍ່ມີນ້ຳພຽງພໍຢູ່ໃນຮ່າງກາຍ |
| ໂຣກສະມອງເຊື່ອມ | ການສູນເສັຽໃຫຍ່ຫລວງຂອງການທຳງານໃນສະມອງລວມທັງການປ່ຽນແປງໃນບຸກຄະ ລິກບຸກຄົນ |
| ການເຈັບປ່ວຍທີ່ສູນເສັຽໄປ | ພະຍາດຊຶ່ງກໍ່ໃຫ້ເກີດມີການສູນເສັຽໃນການທຳງານໃນສະມອງ; ສິ່ງເຫລົ່ານີ້ລວມເອົາ: ພະຍາດ Alzheimer, ໂຣກເຊື່ອມໃນເສັ້ນເລືອດ, ໂຣກເຊື່ອມ Parkinson, ໂຣກປະສາດ Huntington, ພະຍາດ Pick, ໂຣກເຊື່ອມ AIDS, ພະຍາດ Jacob-Cruetzfelt, ແລະ ພະຍາດ Korsakoff |
| ສະແດງໃຫ້ເຫັນ | ເພື່ອຈະສະແດງໃຫ້ເບິ່ງ |
| ການປະຕິເສດ | ການບໍ່ຍອມຮັບທີ່ຈະເຊື່ອ |
| ແຂ້ວປອມ | ແຂ້ວປອມ ຫລື ແຂ້ວທຽມ ທີ່ຈະໃຊ້ແທນແຂ້ວຂອງຄົນສ່ວນນຶ່ງ ຫລື ທັງຫມົດ; ອາດຈະ ຖືກບັນຣະຍາຍວ່າເປັນພາກສ່ວນນຶ່ງ ຫລື ຄົບຖ້ວນ, ແລະ ທາງເທິງ ຫລື ທາງລຸ່ມ |
| ຄວາມທຸກໃຈ | "ອາຣົມຕ່ຳ", ອາດຈະສະແດງໃຫ້ເຫັນການຂາດຄວາມສົນໃຈໃນກິຈກັມຕາມປົກກະຕິ ຫລື ມີການປ່ຽນແປງໃນແບບສະບັບຂອງຄວາມຫິວອາຫານ ຫລື ການຫລັບນອນ, ອາດຈະສະ ແດງໃຫ້ເຫັນຄວາມຮູ້ສຶກຂອງຄວາມຫມົດຫວັງ, ຄວາມບໍ່ມີຄຸນຄ່າ ຫລື ຄວາມຄິດທີ່ຈະຂ້າ ຕົວຕາຍ |
| ຊັ້ນຂອງຜິວຫນັງແທ້ | ຊັ້ນທາງໃນຂອງຜິວຫນັງ |

| | |
|---|---|
| Developmental disabilities | ສະພາບທີ່ເລີ້ມຕົ້ນກ່ອນອາຍຸ 18 ປີທີ່ຖືກຄາດຫມາຍວ່າຈະຍາວນານຕະລອດຊີວິດຂອງບຸກຄົນ ແລະ ກີດກັ້ນຈຳກັດເຂົາເຈົ້າຢ່າງໃຫຍ່ຫລວງໃນກິຈກັມເຫລົ່ານີ້ບາງຢ່າງ: ການບົວຣະບັດຕົນເອງ; ການຕິດຕໍ່ສື່ສານ; ການຮຽນຮູ້; ການເຫນັງຕີງໄປມາ; ແລະ ຫລື ການຊີ້ນຳຕົນເອງ. ຕົວຢ່າງລວມເອົາໂຣກດາວນ໌ຊິນໂດຣມ, ໂຣກສະມອງພິການ ແລະ ໂຣກລະເມີເພີ້ຝັນ |
| ໂຣກເບົາຫວານ | ຊະນິດ 1—ພະຍາດຊຳເຮື້ອຂອງຣະບົບຮໍໂມນ ແລະ ຕ່ອມຊຶ່ງວ່າມ້າມຜະລິດອິນຊູລິນອອກມາຫນ້ອຍນຶ່ງ ຫລື ບໍ່ມີເລີຍ<br>ຊະນິດ 2—ມ້າມເຮັດອິນຊູລິນອອກມາແຕ່ວ່າຮ່າງກາຍໃຊ້ມັນບໍ່ຖືກຕ້ອງ |
| ການກວດໂຣກ | ຊື່ຂອງພະຍາດ ຫລື ສະພາບການເບິ່ງແຍງຜູ້ເຖົ້າ |
| ໂຣກທ້ອງເສັຽ | ຈຳນວນອາຈົມເປັນນ້ຳຫລາຍເກີນໄປ |
| ຜູ້ໃຫ້ຄຳປຶກສາກ່ຽວກັບອາຫານ | ຜູ້ຊ່ຽວຊານດ້ານສຸຂະພາບສະເພາະໃນການວາງແຜນ ແລະ ການຈັດແຈງອາຫານ |
| ການຍ່ອຍອາຫານ | ການດຳເນີນການຂອງຮ່າງກາຍຊຶ່ງອາຫານໄດ້ຖືກແຕກອອກໄປໃນຕົວ ແລະ ດ້ວຍສານເຄມີ, ແລະ ຖືກປ່ຽນມາເປັນຮູບຮ່າງທີ່ສາມາດເຂົ້າໄປໃນສາຍເດີນຂອງເລືອດ ແລະ ຖືກໃຊ້ໄດ້ໂດຍແຊລ໌ |
| ຣະບົບການຍ່ອຍອາຫານ | ກຸ່ມຂອງອະວັຍຍະວະທີ່ທຳການຍ່ອຍອາຫານ, ລວມທັງປາກ, ທ້ອງ, ແລະ ລຳໃສ້ |
| ການຕິດຕໍ່ໂດຍກົງ | ແຜ່ພາຍການຕິດເຊື້ອໂຣກໂດຍກົງຈາກຄົນນຶ່ງໄປຫາຄົນນຶ່ງ |
| ຄວາມເສັຽອົງຄະ | ການຂາດເຂີນຄວາມສາມາດທາງຮ່າງກາຍ ຫລື ຈິດໃຈ ແນວນຶ່ງ ຫລື ຫລາຍແນວທີ່ຄົນສ່ວນຫລາຍມີຢູ່ |
| ພະຍາດ | ການບໍ່ທຳງານຂອງພາກສ່ວນນຶ່ງຂອງຮ່າງກາຍ; ບໍ່ຕ້ອງໄດ້ກ່ຽວພົວພັນນຳອາຍຸ |
| ການຂ້າເຊື້ອໂຣກ | ການໃຊ້ນ້ຳປະສົມຟອກໃຫ້ຂາວ ຫລື ນ້ຳຢາຂ້າເຊື້ອໂຣກແນວອື່ນເພື່ອຈະຂ້າເຊື້ອໂຣກ |
| ອາການວິນວຽນຫົວ | ຄວາມຫລົງລືມກ່ຽວລັບເວລາ, ວັນທີ, ຣະດູການ, ສະຖານທີ່ ຫລື ເອກະລັກບຸກຄົນ |
| ຢາຂັບໄລ່ປັດສະວະ | ສານທີ່ເພີ້ມການຜະລິດນ້ຳຍ່ຽວ |
| ຫມາຍເຫດ | ເພື່ອຈະເຮັດ ຫລື ຮັກສາຫນັງສືບັນທຶກໄວ້ |
| Draw sheet | ຜ້າແພວາງໃສ່ກ້ອງຂອງບຸກຄົນ ແລະ ຖືກໃຊ້ເພື່ອຈະຊ່ວຍຍ້າຍເຂົາເຈົ້າຢູ່ເທິງຕຽງນອນ |
| Droplet spread | ການຕິດຕໍ່ນຳເຊື້ອໂຣກຈາກຄົນທີ່ມີເຊື້ອໂຣກເມື່ອເວລາເຂົາເຈົ້າໄອ ຫລື ຈາມອອກມາ |
| ປະຕິກິຣິຍານຳຢາ | ປະຕິກິຣິຍາຣະຫວ່າງຢາ ແລະ ສານແນວອື່ນໂດຍສ່ວນຫລາຍແລ້ວເປັນຜົນອອກເປັນການສະທ້ອນທີ່ບໍ່ຕ້ອງການ ແລະ ຊຶ່ງກີດກັ້ນຢາຈາກການທຳງານຕາມທີ່ຖືກຄາດຫມາຍໄວ້ |
| ກົມ DSHS | ກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ, ຫ້ອງການຂອງຣັດທີ່ເອົາໂຄງການ ແລະ ການບໍຣິການໃຫ້ເພື່ອຈະຊ່ວຍເຫລືອເດັກນ້ອຍ, ຜູ້ໃຫຍ່, ແລະ ຄອບຄົວຢູ່ໃນຣັດວໍຊິງຕັນ |
| ແຜນການເບິ່ງແຍງດູແລຂອງກົມ DSHS | ແຜນການເບິ່ງແຍງດູແລ (ແຜນການປິ່ນປົວ) ທີ່ຖືກຂຽນໄວ້ໂດຍຜູ້ຕາງຫນ້າຂອງກົມ DSHS ສຳລັບລູກຄ້າຂອງກົມ DSHS |

| | |
|---|---|
| ຄວາມຫຍຸ້ງຍາກຂອງ ໂຣກກືນລຳບາກ | ຄວາມຫຍຸ້ງຍາກລຳບາກນຳການກືນລົງ |

# E

| | |
|---|---|
| ອີໂຄລາຍ | ບັກເທເຣັຽທີ່ເຂົ້າໄປໂດຍຜ່ານອາຫານ ຫລື ນໍ້າປົນເປື້ອນເຮັດໃຫ້ເກີດມີການອອກຮ້ອນຂອງລຳໄສ້ນ້ອຍ |
| ການໃຂ່ຂື້ນຈາກນໍ້າ | ການໃຂ່ຂື້ນ, ການເກັບນໍ້າໄວ້ໃນເນື້ອ; ຈະພົບເຫັນຢູ່ສະເນີໃນສົ້ນຕີນ, ຂາ ຫລື ມື |
| ການກົດຂີ່ຂົ່ມເຫັງຄົນແກ່ | ການເຮັດນໍາບໍ່ດີໃສ່ຄົນແກ່ຊາຣາ |
| Elimination | ການດໍາເນີນການຂອງການເອົາຂອງເສັຽອອກຈາກຮ່າງກາຍໂດຍການຖ່າຍຫນັກ ຫລື ການຍ່ຽວ |
| ອາຣົມ | ຄວາມຮູ້ສຶກ |
| ຄວາມຕ້ອງການດ້ານຈິດໃຈ ແລະ ສັງຄົມ | ກົດກຳນົດພື້ນຖານຂອງຄວາມດີໃຈ ແລະ ຄວາມເປັນເພື່ອນ |
| Enabler | ທຸກໆສິ່ງທີ່ຊ່ວຍເຫລືອລູກຄ້າກິນຢາຂອງເຂົາເຈົ້າ (ເຊັ່ນວ່າ; ຈອກ, ບ່ວງ) |
| ການສີດນໍ້າເຂົ້າຮູກົ້ນ | ການເອົານໍ້າໃສ່ໃນຮູກົ້ນເພື່ອຈະລ້າງ ຫລື ເຮັດໃຫ້ມີການປວດຖ່າຍ, ຫລື ເພື່ອຈະໃຫ້ຢາ ຫລື ການບໍາບັດແນວອື່ນ |
| ສິ່ງແວດລ້ອມ | ສິ່ງແວດລ້ອມຊຶ່ງສະທ້ອນເຖິງບຸກຄົນ, ລວມທັງແສງໄຟ, ສຽງ, ສິ່ງສັມຜັດ, ແລະ ການເຫນັງຕີງ |
| ໂຣກບ້າຫມູ | ສະພາບຂອງຣະບົບເສັ້ນປະສາດຊຶ່ງລວມເອົາການຊັກບ້າ |
| ການອອກຕະລາດຈໍາເປັນ | ຈໍາກັດໄປເຖິງການເດີນທາງສັ້ນໆ, ບາງຄັ້ງບາງຄາວໄປໃນເຂດທ້ອງຖິ່ນເພື່ອຈະຊອກຊື້ເອົາອາຫານ, ສິ່ງຈໍາເປັນດ້ານການພະຍາບານ, ແລະ ສິ່ງຂອງໃຊ້ຂອງເຮືອນທີ່ຕ້ອງການໂດຍສະເພາະສໍາລັບສຸຂະພາບ, ການດໍາຣົງຊີວິດ, ແລະ ຄວາມຢູ່ດີມີແຮງຂອງລູກຄ້າ |
| ຂັບຖ່າຍອອກ | ເພື່ອຈະເອົາອອກຈາກຮ່າງກາຍ |
| ການຫາຍໃຈອອກ | ເພື່ອຈະຫາຍໃຈເອົາອາກາດອອກຈາກປອດ |
| ແຂນຂາ | ແຂ່ງຂາຂອງຮ່າງກາຍ, ລວມເອົາແຂນ ແລະ ຂາ |
| ການຕິດຕໍ່ທາງຕາ | ສອງຄົນເບິ່ງກັນໂດຍກົງຕາຕໍ່ຕາ |

# F

| | |
|---|---|
| ການສະແດງອອກມາທາງຫນ້າ | ຮູບພາບຂອງຫນ້າຂອງບຸກຄົນ |
| ການເປັນຂີ້ແຂັ່ນ | ກ້ອນໃຫຍ່ຂອງຂີ້ທີ່ແຫ້ງ, ແຂງທີ່ບໍ່ສາມາດອອກມາໄດ້ |
| ຂີ້ | ຂອງເສດຂອງຮ່າງກາຍຈາກອໂຈົມ |
| ຄວາມຄິດເຫັນ | ປະຕິກິຣິຍາ ຫລື ການຕອບຕໍ່ແນວໃດແນວນຶ່ງ |
| ທໍ່ປ້ອນ | ທໍ່ພິເສດທີ່ຜ່ານເຂົ້າໄປໃນກະເພາະອາຫານເພື່ອໃຫ້ອາຫານຫລໍ່ລ້ຽງ |
| ອາການໄຂ້ | ອຸນຫະພູມຂອງຮ່າງກາຍສູງເກີນທັມມະດາ |
| ໄຟເບີ | ສິ່ງຈໍາເປັນທີ່ຊາຊາສໍາລັບການກໍາຈັດອອກໄປທີ່ເຫມາະສົມ |

| | |
|---|---|
| ການສະແວງຫາຜົນປະໂຍດທາງການເງິນ | ການໃຊ້ທີ່ຜິດກົດໝາຍ ຫລື ບໍ່ຖືກຕ້ອງຂອງຊັບສິນບັດ, ເງິນ, ຫລື ຊັບສິນຂອງຜູ້ໃຫຍ່ອ່ອນແອ |
| ການປະຖິ້ມພະຍາບານ | ການປິ່ນປົວສຸກເສີນທີ່ຖືກເຮັດກ່ອນທີ່ການຊ່ວຍເຫລືອພະຍາບານຈະມາຮອດ |
| ການປັບຕົວເຂົ້າກັບສະພາບການ | ຄວາມສາມາດທີ່ຈະປັບຕົວ ຫລື ຕອບສະໜອງຕໍ່ການປ່ຽນແປງ ຫລື ທີ່ຈະກົງບ່ອນຕໍ່ |
| ພະຍາດມາຈາກອາຫານ | ພະຍາດຕ່າງໆທີ່ເກີດຂື້ນມາຈາກການກິນອາຫານປົນເປື້ອນ |
| ກຸ່ມຂອງອາຫານ | ເມັດພັນ, ຜະລິດທະພັນຈາກນ້ຳນົມ, ໝາກໄມ້ ແລະ ຜັກ, ໂປຣຕີນ |
| ການແຕກຫັກ | ການແຕກຫັກຂອງກະດູກຍາວ; ກະດູກຫັກ |
| ການສຽດສີ | ການຖູໃສ່ກັນຂອງໜ້າພຽງອັນນຶ່ງໃສ່ອັນນຶ່ງ |

# G

| | |
|---|---|
| Gait belt | ສາຍແອວໃສ່ອ້ອມແອວເພື່ອຈະຊ່ວຍໃນການຍ້າຍໄປມາ ຫລື ການຍ່າງ |
| ຣະບົບ GI (ຣະບົບທາງເດີນອາຫານ) | ກຸ່ມຂອງອະວັຍຍະວະທີ່ດຳເນີນອາຫານສຳລັບການໃຊ້ໂດຍຮ່າງກາຍລວມເອົາປາກ, ລຳຄໍ, ກະເພາະອາຫານ, ລຳໃສ້, ຕັບ ແລະ ລຳໃສ້ໃຫຍ່ |
| ຢາທົ່ວໄປ | ຜະລິດທະພັນຢາທີ່ບໍ່ໄດ້ເປັນເຈົ້າຂອງ ຫລື ຄວບຄຸມຕໍ່ໄປອີກແລ້ວ ໂດຍບໍຣິສັດໃດບໍຣິສັດນຶ່ງໂດຍສະເພາະ |
| ອະວັຍຍະວະສືບພັນ | ອະວັຍຍະວະສືບພັນຂ້າງນອກ, ບໍຣິເວນ “ລັບສ່ວນຕົວ” ຂອງຮ່າງກາຍ |
| Germ | ສິ່ງມີຊີວິດນ້ອຍໆ, ສ່ອງກ້ອງເບິ່ງຈຶ່ງເຫັນທີ່ມີຊີວິດຢູ່ເຊັ່ນວ່າບັກເທເຣັຽ, ໄວຣັສ, ຫລື ເນື້ອງອກ |
| ການສະແດງທ່າທາງ | ການເຫັນງຕິງທີ່ຖືກເຮັດດ້ວຍແຂນ, ມື ຫລື ຮ່າງກາຍຂອງທ່ານ |
| ໂຣກຕາແຂງ | ຄວາມກົດດັນທີ່ເພີ້ມຂື້ນຢູ່ໃນໜ່ວຍຕາ |
| ກລູໂຄສ | ນ້ຳຕານ |
| ການຊັກບ້າໃຫຍ່ | ການຊັກບ້າທີ່ເປັນຜົນມາຈາກການເສັຽສະຕິ |
| ຄວາມເສົ້າໂສກ ແລະ ການໄວ້ທຸກ | ປະຕິກິຣິຍາຕໍ່ການໄວ້ທຸກ |
| ຄວາມບໍ່ພໍໃຈ | ຄຳຮ້ອງທຸກເປັນທາງການ |
| ກົດຣະບຽບພື້ນຖານ | ກົດຣະບຽບພື້ນຖານຂອງການປະພຶດ |
| ຄວາມຜິດ | ຄວາມຮູ້ສຶກທີ່ເປັນຄວາມຜິດຂອງຄົນນຶ່ງ |

# H

| | |
|---|---|
| ນິສັຍ | ແນວໃດແນວນຶ່ງທີ່ທ່ານເຮັດສະເນີມາ ແລະ ຕາມປົກກະຕິ, ບາງເທື່ອໂດຍບໍ່ຮູ້ຈັກເລີຍວ່າທ່ານກຳລັງເຮັດຢູ່ |
| ອັນຕະຣາຍ | ແຫ່ລງມາຂອງອັນຕະຣາຍທີ່ອາດຈະເປັນໄປໄດ້, ໂອກາດຈະມີສຳລັບການບາດເຈັບ ຫລື ອັນຕະຣາຍ |

| | |
|---|---|
| Health care directives | ໃບໜັງສືຄຳຊີ້ນຳຊຶ່ງອະທິບາຍຄວາມປະສົງຂອງບຸກຄົນກ່ຽວກັບການຕັດສິນໃຈທາງດ້ານພະຍາບານຕ່າງໆຫລືການຈົບສິ້ນຊີວິດຊຶ່ງຕ້ອງໄດ້ເຮັດຢູ່ໃນເຫດການທີ່ເຂົາເຈົ້າກາຍເປັນຜູ້ບໍ່ສາມາດທີ່ຈະທຳການຕັດສິນໃຈໃຫ້ເຂົາເຈົ້າເອງໄດ້; ຍັງຖືກເອີ້ນອີກວ່າຄຳຊີ້ນຳລ່ວງໜ້າ |
| ເຄື່ອງຊ່ວຍການຟັງສຽງ | ເຄື່ອງໃສ່ຢູ່ໃນຫູເພື່ອຈະເຮັດໃຫ້ການຟັງສຽງດີຂຶ້ນ |
| ຄວາມບົກພ່ອງນຳການຟັງສຽງ | ການສູນເສັຽຂອງສຽງ, ການເປັນຫູຫນວກ |
| ພະຍາດຫົວໃຈ | ສະພາບຜິດປົກກະຕິຂອງຫົວໃຈ ແລະ/ຫລື ການເດີນຂອງເລືອດ |
| ເຮປາໄທຕິສ | ການຕິດເຊື້ອໄວຣັສຂອງຕັບ, ລວມທັງເຮປາໄທຕິສ A, B, C ແລະ ອື່ນໆ |
| HIV (ໄວຣັສການຂາດທາດຕ້ານທານຂອງມະນຸດ) | ເຊື້ອໄວຣັສຊຶ່ງກໍ່ໃຫ້ເກີດໂຣກ AIDS |
| ພື້ນທີ່ | ພືດ, ສັດ ຫລື ມະນຸດບ່ອນທີ່ແມ່ພະຍາດອາສັຍຢູ່ |
| ອະນາມັຍ | ຢູ່ຢ່າງສະອາດ ແລະ ມີອະນາມັຍ |
| ນ້ຳຕານໃນເລືອດສູງ | ຣະດັບຂອງນ້ຳຕານໃນເລືອດສູງຜິດປົກກະຕິ |
| ຄວາມດັນໃນເລືອດສູງ | ຄວາມກົດດັນໃນເລືອດສູງຜິດປົກກະຕິ |
| ນ້ຳຕານໃນເລືອດຕ່ຳ | ຣະດັບຂອງນ້ຳຕານໃນເລືອດຕ່ຳຜິດປົກກະຕິ |
| ຄວາມດັນໃນເລືອດຕ່ຳ | ຄວາມກົດດັນໃນເລືອດຕ່ຳຜິດປົກກະຕິ |

# I

| | |
|---|---|
| ບໍ່ເຫນັງຕີງ | ບໍ່ສາມາດທີ່ຈະເຫນັງຕີງ |
| ທາດຕ້ານທານ | ຄວາມຕ້ານທານຕໍ່ພະຍາດແນວໃດແນວນຶ່ງຍ້ອນການຕ້ານທານຂອງທາດໃນຮ່າງກາຍຕໍ່ຕ້ານເຊື້ອໂຣກ |
| ຣະບົບຕ້ານທານ | ການປຸ້ມລຸມຂອງແຊລ໌, ຜູ້ສົ່ງທາດເຄມີ, ແລະ ໂປຣຕີນທີ່ເຮັດວຽກຮ່ວມກັນເພື່ອຈະປ້ອງກັນຮ່າງກາຍຈາກເຊື້ອໂຣກ |
| ການສັກຢາກັນໂຣກ | ການປິ່ນປົວພະຍາບານທີ່ຖືກເອົາໃຫ້ເພື່ອຈະປ້ອງກັນໃສ່ພະຍາດອັນໃດອັນນຶ່ງໂດຍສະເພາະ |
| ການເປັນຂີ້ແຂ້ນ | ຄວາມບໍ່ສາມາດທີ່ຈະມີການຂັບຖ່າຍອອກໄປ, ລຳໃສ້ໃຫຍ່ຖືກຕັນດ້ວຍກີ້ແຂງຫລາຍ |
| Impaired | ບໍ່ທຳງານຢ່າງຖືກຕ້ອງ |
| ບໍ່ໃຊ້ການ | ບໍ່ທຳງານ, ບໍ່ເຮັດວຽກ |
| ບໍ່ມີຄວາມສາມາດເຮັດໄດ້ | ບໍ່ສາມາດທີ່ຈະປະຕິບັດຫນ້າທີ່, ຕອບໂຕ້ (ເຊັ່ນວ່າບຸກຄົນບໍ່ສາມາດທີ່ຈະທຳການຕັດສິນໃຈກ່ຽວກັບການປິ່ນປົວຂອງເຂົາເຈົ້າ) |
| ໃບລາຍງານເຫດການ | ໃບຫນັງສືບັນທຶກກ່ຽວກັບແນວໃດແນວນຶ່ງຜິດປົກກະຕິ, ບໍ່ຄາດຫມາຍ ຫລື ຄວາມຜິດພາດ |
| ຄວາມອົດກັ້ນບໍ່ໄດ້ | ຄວາມບໍ່ສາມາດທີ່ຈະຄວບຄຸມການທຳງານຂອງພົກຍ່ຽວ ແລະ/ຫລື ການຖ່າຍຫນັກ |
| ເປັນອິດສະຣະ ຫລື ຄວາມເປັນອິດສະຣະ | ທີ່ຈະຫວັງເພິ່ງຕົນເອງ ແລະ ສາມາດທີ່ຈະເຮັດພາລະກິດສຳລັບຕົນເອງໄດ້ |
| ການສັມຜັດຕິດຕໍ່ໂດຍທາງອ້ອມ | ການຈັບບາຍສິ່ງໃດສິ່ງນຶ່ງທີ່ຄົນທີ່ມີເຊື້ອໂຣກໄດ້ຈັບບາຍແລ້ວ |

| | |
|---|---|
| Indwelling catheter | ທໍ່ທີ່ຖືກສອດໃສ່ໃນພົກຍ່ຽວເພື່ອຈະລະບາຍນ້ຳຍ່ຽວອອກມາ |
| ການຕິດເຊື້ອ | ການຂະຫຍາຍຕົວຂອງເຊື້ອໂຣກທີ່ເປັນອັນຕະລາຍຢູ່ໃນຮ່າງກາຍ |
| ການຄວບຄຸມການຕິດເຊື້ອໂຣກ | ການຢຸດເຊື້ອໂຣກຈາກການແຜ່ພາຍ ແລະ ການກໍ່ເກີດໃຫ້ມີການຕິດເຊື້ອ |
| ພະຍາດຕິດຕໍ່ | ແຜ່ພາຍ, ສາມາດເຮັດໃຫ້ເກີດມີການຕິດເຊື້ອໂຣກໄດ້ງ່າຍໆ |
| ການເຜົາໄຫມ້ອອກຮ້ອນ | ປະຕິກິລິຍາຂອງຮ່າງກາຍຕໍ່ການບາດເຈັບ ຫລື ການຕິດເຊື້ອໂຣກ, ອາການລວມເອົາການເປັນປ່ານແດງ, ຄວາມເຈັບປວດ, ແລະ/ຫລື ການໃຄ່ຂຶ້ນໃນບໍລິເວນນັ້ນ |
| ການຫາຍໃຈເຂົ້າ | ເພື່ອຈະຫາຍໃຈເຂົ້າໄປ |
| ໂຣກນອນບໍ່ຫລັບ | ຄວາມບໍ່ສາມາດທີ່ຈະນອນໄດ້ ຫລື ນອນໃຫ້ຫລັບໄປ |
| ກິຈການສຳຄັນຂອງການດຳຣົງຊີວິດປະຈຳວັນ (IADL) | ພາລະກິດປະຈຳວັນທີ່ຖືກເຮັດຢູ່ອ້ອມແອ້ມເຮືອນ ຫລື ຢູ່ໃນຊຸມນຸມຊົນ, ລວມທັງການຈັດແຈງອາຫານ, ການອອກຕະລາດເພື່ອຈະຊື້ຂອງກິນ ແລະ ວຽກບ້ານ |
| ອິນຊູລິນ | ຮໍໂມນທີ່ຖືກເຮັດອອກມາໂດຍມ້າມຊຶ່ງທັບນ້ຳຕານ ແລະ ແປ້ງອອກຈາກກັນ |
| ການກະແທກອິນຊູລິນ | ສະພາບຊຶ່ງເປັນຜົນອອກມາຈາກການມີອິນຊູລິນຫລາຍເກີນໄປ ຫລື ມີອາຫານຫນ້ອຍເກີນໄປເຮັດໃຫ້ເກີດມີນ້ຳຕານໃນເລືອດຕ່ຳຫລາຍ |
| ການຮຽນຮູ້ໄປນຳກັນ | ການຝຶກຝົນຊຶ່ງນັກຮຽນເປັນຄົນເຂົ້າຮ່ວມຈິງຈັງ |
| ລະຫວ່າງບຸກຄົນ | ຄວາມສັມພັນລະຫວ່າງບຸກຄົນ |
| ໃສ້ | ລຳໃສ້ |
| ພົກປິ້ນຄືນບໍ່ໄດ້ | ສະພາບການທີ່ບໍ່ສາມາດປ່ຽນຄືນໄປໃສ່ແບບທີ່ມັນເປັນມາແຕ່ກ່ອນໄດ້ |
| ການແຍກ | ການແຍກອອກຈາກຄົນອື່ນ |

# J

| | |
|---|---|
| ບ່ອນຕໍ່ | ພາກສ່ວນຂອງຮ່າງກາຍບ່ອນທີ່ກະດູກສອງອັນຕໍ່ເຂົ້າໃສ່ກັນ, ເຊັ່ນວ່າ ຫົວເຂົ່າ, ຂໍ້ມື, ແລະ ແຂນສອກ |

# K

# L

| | |
|---|---|
| ຮີມຊ່ອງຄອດຜູ້ຍິງ | ບ່ອນພັບຂອງຫນັງຢູ່ທາງເຂົ້າຂອງອະວັຍຍະວະເພດຍິງ |
| ການຊັກເຄື່ອງ | ການຊັກເຄື່ອງ, ການອົບເຄື່ອງ, ການລີດເຄື່ອງ, ແລະ ການແປງເຄື່ອງ ແລະ ຜ້າປູບ່ອນທີ່ຖືກໃຊ້ໂດຍລູກຄ້າ ຫລື ການຊ່ວຍເຫລືອລູກຄ້າທີ່ຈະປະຕິບັດພາລະກິດເຫລົ່ານີ້ |
| ແບບວິທີຂອງການຮຽນຮູ້ | ຫົນທາງທີ່ບຸກຄົນໃຊ້ຄວາມຮູ້ສຶກທາງຮ່າງກາຍຂອງເຂົາເຈົ້າທີ່ຈະຮຽນຮູ້ |
| ຮອຍແປ້ວ | ປາກບາດ |
| ຍົກ | ຍົກຂຶ້ນ, ຍ້າຍ |
| ເສັ້ນເອັນ | ເສັ້ນແຫນັ້ນຫນາຂອງເນື້ອຕິດກັນທີ່ມັດກະດູກໃສ່ກັນ |
| Linen | ຜ້າປູຕຽງ, ຜ້າປົກຕຽງ, ຊິບຫມອນ, ຜ້າເຊັດມື ແລະ ຜ້າເຊັດຫນ້າ |

| | |
|---|---|
| ການເຄື່ອນຍ້າຍ | ຄົນໃດຄົນນຶ່ງເຄື່ອນຍ້າຍແນວໃດ |
| ນ້ຳມັນລໍ່ລື່ນ | ສານ, ເຊັ່ນວ່າເປໂທຣລຽມແຈລລີ, ກລີເຊີຣິນ ຫລື ຄຣີມເຢັນ, ຖືກໃຊ້ເພື່ອຈະເຮັດໃຫ້ຫນ້າພຽງລື່ນ ຫລື ປຽກຊຸ່ມ ແລະ ເພື່ອຈະລຸດຜ່ອນການສຽດສີກັນ ຫລື ການຄັນຄາຍ |
| ລໍ່ລື່ນ | ເພື່ອຈະເຮັດໃຫ້ມື່ນ ຫລື ກ້ຽງ |

# M

| | |
|---|---|
| Mandatory Reporter | ບຸກຄົນຜູ້ທີ່ຖືກຕີຄວາມຫມາຍໂດຍກົດຫມາຍໃຫ້ລາຍງານການຣົບກວນທີ່ນ່າສົງສັຍ, ການບໍ່ຫົວຊານຳ ຫລື ເມື່ອຜູ້ໃຫຍ່ທີ່ອ່ອນແອໄດ້ຖືກສວຍໂອກາດດ້ານການເງິນ |
| ຂາດອາຫານ | ສະພາບທີ່ເປັນຜົນອອກມາຈາກການບໍ່ກິນອາຫານໃຫ້ພຽງພໍ ຫລື ການບໍ່ກິນອາຫານທີ່ມີພະລານາມັຍ |
| ການຈັດແຈງອາຫານ | ລວມເອົາການວາງແຜນຄາບອາຫານ ແລະ ອາຫານພິເສດ, ການຈັດແຈງຄາບເຂົ້າສຳລັບລູກຄ້າຜູ້ທີ່ບໍ່ສາມາດເຂົ້າຮ່ວມນຳໄດ້, ແລະ ການທຳຄວາມສະອາດຫລັງຈາກຄາບອາຫານ |
| Medication administration | ການເອົາຢາໃສ່ປາກຂອງລູກຄ້າ ຫລື ການເອົາຢາໃສ່ຕາ, ຫູ, ຜີວຫນັງ, ຫລື ພາກສ່ວນໃດພາກສ່ວນນຶ່ງຂອງຮ່າງກາຍຂອງເຂົາເຈົ້າ. ອັນນີ້ສາມາດຖືກເຮັດໄດ້ໂດຍ RN, LPN ຫລື ສະມາຊິກຄອບຄົວເທົ່ານັ້ນ. RN ຍັງຈະແຕ່ງຕັ້ງພາລະຫນ້າທີ່ອັນນີ້ໃຫ້ NAC, NAR ຜູ້ທີ່ມີຄຸນນະວຸດທິ ແລະ HCA ທີ່ຖືກຢັ້ງຢືນກໍໄດ້ |
| Medication assistance | ເພື່ອຈະຊ່ວຍລູກຄ້າໃຫ້ໃຊ້ຢາຂອງເຂົາເຈົ້າເອງໂດຍການປະຕິບັດຕາມນຳ “ສິ່ງທີ່ຖືກຕ້ອງຫ້າຢ່າງ”. ອັນນີ້ລວມເອົາການຊີ້ນຳ, ການຍື່ນກ່ອງຢາໃຫ້ເຂົາເຈົ້າ, ການເປີດກ່ອງຢາ, ການໃຊ້ແນວຊ່ວຍເຫລືອ ຫລື ການວາງຢາໃສ່ມືຂອງລູກຄ້າ |
| Medication Route | ຫົນທາງທີ່ຢາໄດ້ຖືກໃຊ້, ເຊັ່ນວ່າທາງປາກ, ທາງຜີວຫນັງ, ທາງຮູກົ້ນ, ທາງຊ່ອງຄອດຜູ້ຍິງ, ທາງຫາຍໃຈເຂົ້າ, ຫລື ທາງສັກເຂົ້າ |
| ການກົດຂີ່ຂົ່ມເຫັງທາງຈິດໃຈ | ການເຮັດໃຫ້ເກີດມີຄວາມເຈັບປວດທາງຈິດໃຈ ຫລື ຄວາມອຸກອັ່ງໂດຍເຈດຕະນາ |
| ການເຈັບປ່ວຍທາງຈິດໃຈ | ພະຍາດໃນສະມອງທີ່ສະທ້ອນເຖິງຄວາມຄິດ, ຄວາມຮູ້ສຶກ, ຫລື ການປະພຶດ |
| ສາມາດເຮັດໄດ້ຕາມໃຈ | ສາມາດທີ່ຈະຄິດໄດ້ຢ່າງແຈ່ມແຈ້ງ ແລະ ມີເຫດຜົນ |
| ສິ່ງມີຊີວິດນ້ອຍທີ່ສຸດ | ບັກເທເຣັຽທີ່ຖືກຜະລິດອອກມາຈາກພະຍາດ, ຫລື ສິ່ງທີ່ມີຊີວິດ, ທີ່ນ້ອຍເກີນໄປທີ່ຈະຖືກມອງເຫັນໄດ້ດ້ວຍຕາເປົ່າ ແລະ ຈະເຫັນໄດ້ດ້ວຍກ້ອງສ່ອງຈຸນລະທັດເທົ່ານັ້ນ |
| ການເຄື່ອນທີ່ | ຄວາມສາມາດທີ່ຈະຍ່າງ ແລະ ເຄື່ອນຍ້າຍໄປມາ |
| ເຄື່ອງຊ່ວຍນຳການເຄື່ອນທີ່ | ເຄື່ອງທີ່ຈະຊ່ວຍລູກຄ້າໃຫ້ຍ່າງ ແລະ ເຄື່ອນຍ້າຍໄດ້ງ່າຍກວ່າເກົ່າ, ເຊັ່ນວ່າໄມ້ຄ້ອນເທົ່າ ຫລື ແນວພາຍ່າງ |
| ຂີ້ມູກ | ນ້ຳຫນຽວ, ປຽກທີ່ຖືກເຮັດອອກມາທາງໃນຂອງດັງ ແລະ ພາກສ່ວນອື່ນໆຂອງຮ່າງກາຍ |
| ເນື້ອຫຸ້ມບາງ | ຜີວຫນັງບາງໆທີ່ເຮັດຂີ້ມູກອອກມາເພື່ອຈະປ້ອງກັນຫນ້າພຽງທາງໃນຂອງຮ່າງກາຍ (ເຊັ່ນວາດັງ ແລະ ປາກ) |
| ຣະບົບກ້າມເນື້ອ | ກ້າມເນື້ອ, ຊຶ່ງເຮັດໃຫ້ພາກສ່ວນຂອງຮ່າງກາຍເຫນັງຕຶງ |
| ກ້າມເນື້ອຫົວໃຈຕາຍ | ຫົວໃຈວາຍ |

# N

| | |
|---|---|
| NPO | ບໍ່ມີຫຍັງທາງປາກ, ບໍ່ມີອາຫານ ຫລື ເຄື່ອງດື່ມກິນເຂົ້າໂດຍທາງປາກ |
| ການຕໍ່ສູ້ຂອງຮ່າງກາຍຕາມທັມມະຊາດ | ທາດສານທາງນອກ ແລະ ທາງໃນຢູ່ໃນຮ່າງກາຍທີ່ຊ່ວຍທຳລາຍເຊື້ອໂຣກ (ເຊັ່ນວ່າຜິວໜັງ, ແຊລ໌ເລືອດຂາວ, ສານນ້ຳກົດຢູ່ໃນທ້ອງ) |
| ປະລະເລີຍ ແລະ ການລະເລີຍ | ທີ່ຈະປະຕິເສດ ຫລື ບໍ່ເອົາການບົວຣະບັດທີ່ຈຳເປັນ ຫລື ສິ່ງຈຳເປັນຂອງຊີວິດໃຫ້ |
| ຍ່າງບໍ່ໄດ້ | ບໍ່ສາມາດຍ່າງໄດ້ |
| ບໍ່ແມ່ນປ່ອນທາງປາກ | ການສະແດງອອກມາບໍ່ແມ່ນທາງປາກ, ພາສາຂອງຮ່າງກາຍ, ການສະແດງສີໜ້າ, ແລະ ການສະແດງດ້ວຍມື |
| ຄວາມສົມບູນທັມມະດາ | ການດຳເນີນການຂອງການແກ່ຕົວລົງຕາມທັມມະດາຊຶ່ງລວມເອົາການປ່ຽນແປງທີ່ຄາດໄວ້ລ່ວງໜ້າໄດ້ໃນທາງທີ່ຮ່າງກາຍທຳງານ |
| ການແຕ່ງຕັ້ງນາຍໜໍ | ເມື່ອເວລາ RN ແຕ່ງຕັ້ງພາລະກິດການເບິ່ງແຍງຜູ້ເຖົ້າໃຫ້ NAC ແລະ NAR ຜູ້ທີ່ມີຄຸນນະວຸດທິ |
| ອາຫານ | ທາດສານຕ່າງໆທີ່ພືດ ແລະ ສັດຕ້ອງການເພື່ອຈະມີຊີວິດຢູ່ ແລະ ເຕີບໂຕ |
| ອາຫານການກິນ | ການດຳເນີນການຂອງການເອົາອາຫານເຂົ້າ ແລະ ການໃຊ້ອາຫານຂອງຮ່າງກາຍ |

# O

| | |
|---|---|
| ຕຸ້ຍ | ມີນ້ຳໜັກຫລາຍເກີນໄປ |
| ການຈົດບັນທຶກກ່ຽວກັບບັນຫາ | ການຂຽນຄວາມຈິງລົງໄປເທົ່ານັ້ນ |
| ສັງເກດ/ການສັງເກດເບິ່ງ | ທີ່ຈະຈອບແນມເບິ່ງການປ່ຽນແປງໃນສະພາບການ |
| Ombudsman | ຄົນຜູ້ທີ່ສະໜັບສະໜູນສຳລັບສິດທິຂອງລູກຄ້າຢູ່ໃນສະຖານທີ່ປິ່ນປົວຣະຍະຍາວ |
| ຄຳຖາມທີ່ປິດລົງດ້ວຍເປີດກວ້າງ | ຄຳຖາມທີ່ຕ້ອງມີການອະທິບາຍ ຫລື ການສົນທະນາກັນ |
| ທາງປາກ | ທຸກໆຢ່າງທີ່ກ່ຽວກັບທາງປາກ |
| ອະນາມັຍປາກ | ການທຳຄວາມສະອາດແຂ້ວ, ປາກ, ແລະ ຟັນແຂ້ວ |
| ອະວັຍຍະວະ | ພາກສ່ວນຂອງຮ່າງກາຍທີ່ປະຕິບັດໜ້າທີ່ບາງຢ່າງ, ເຊັ່ນວ່າສະໝອງ, ກະເພາະອາຫານ, ແລະ ປອດ |
| ສິ່ງມີຊີວິດ | ສິ່ງທີ່ມີຊີວິດຢູ່ທຸກໆຢ່າງ |
| ໂຣກກະດູກພ່ອຍ | ສະພາບພະຍາບານຊຶ່ງວ່າກະດູກກາຍເປັນພ່ອຍ ແລະ ແຕກຫັກງ່າຍຍ້ອນການຂາດເຂີນທາດຄາລຊຽມ ຫລື ໄວຕາມິນ D ຫລື ການປ່ຽນແປງໃນຮໍໂມນ |

# P

| | |
|---|---|
| ຄວາມໄວ | ຄວາມໄວຊຶ່ງແນວໃດແນວນຶ່ງໄດ້ຖືກເຣັດ |
| ການເປັນອັມມະພາດ | ການສູນເສັຽຄວາມສາມາດທີ່ຈະເໜັງຕີງພາກສ່ວນຂອງຮ່າງກາຍ |
| ໂຣກຣະວາດຣະແວງ | ສະພາບທີ່ບຸກຄົນຄິດວ່າສິ່ງໃດສິ່ງນຶ່ງບໍ່ດີຈະເກີດຂຶ້ນ ຫລື ວ່າບຸກຄົນປາກຈະທຳຮ້າຍເຂົາເຈົ້າ |

| | |
|---|---|
| ໂຣກອຳມະພາດທາງລຸ່ມ | ການເປັນອຳມະພາດຈາກແອວລົງໄປ |
| ການເວົ້າຫລຳຄືນ | ເວົ້າຄຳເວົ້າຄືນໃນຄຳເວົ້າຂອງທ່ານເອງ |
| ໂຣກພາຣກິນເຊິນ Parkinson's | ພະຍາດຂອງຣະບົບສູນກາງເສັ້ນປະສາດທີ່ຂະຫຍາຍຕົວຢ່າງຊ້າໆ ແລະ ກໍ່ໃຫ້ເກີດມີກ້າມເນື້ອແຂງ, ສັ່ນສາຍ, ເວົ້າສຽງສັ່ນ ແລະ ມີຄວາມອ່ອນແອ |
| ເຊື້ອໂຣກ | ເຊື້ອໂຣກຕ່າງໆທີ່ເຮັດໃຫ້ເປັນພະຍາດ |
| Pericare | ການລ້າງແລະເຊັດບໍຣິເວນອະວັຍຍະວະເພດ ແລະ ກົ້ນຂອງຮ່າງກາຍ; ຍັງຖືກເອີ້ນອີກວ່າແມ່ນການບົວຣະບັດຣະຫວ່າງອະວັຍຍະວະ ແລະ ກົ້ນ |
| ການບົວຣະບັດຣະຫວ່າງອະວັຍຍະວະເພດ ແລະ ກົ້ນ | ບໍຣິເວນອະວັຍຍະວະເພດ; ໃນຜູ້ຊາຍ, ມັນລວມເອົາໂຄຍ ແລະ ຫຳ; ໃນຜູ້ຍິງ, ມັນລວມເອົາຝາແຄມ ແລະ ຫີ |
| ການບໍຣິການເບິ່ງແຍງສ່ວນຕົວ | ພາລະກິດທີ່ຖືກເຮັດເພື່ອຈະຊ່ວຍລູກຄ້ານຳກິຈກັມການດຳຣົງຊີວິດປະຈຳວັນ ແລະ ການດຳຣົງຊີວິດທີ່ຈຳເປັນປະຈຳວັນ |
| ອະນາມັຍສ່ວນຕົວ | ການທຳຄວາມສະອາດ ແລະ ການແຕ່ງຕົວຂອງບຸກຄົນ, ລວມທັງການບົວຣະບັດຜົມ, ແຂ້ວ, ແຂ້ວປອມ, ການແຖຫນວດ, ແລະ ການຕັດເລັບ |
| ການຊັກມ້ອຍ | ການຊັກບ້າຊຶ່ງບໍ່ແມ່ນຜົນມາຈາກການເສັຽສະຕິ |
| ໂຣກປອດບວມ | ການຕິດເຊື້ອຂອງປອດ, ອາການລວມເອົາການຖືຄຶງໄຂ້, ການຮູ້ສຶກຫນາວ ແລະ ການໄອ |
| Positioning | ທ່າທາງວ່າບຸກຄົນຖືກປະໄວ້ຢ່າງເຫມາະສົມແນວໃດເມື່ອເວລານັ່ງຢູ່ ຫລື ນອນຢຽດລົງ |
| ທ່າທາງ | ທ່າ ຫລື ກິຣິຍາທ່າທາງຂອງຮ່າງກາຍ |
| ຄວາມລະມັດລະວັງ | ມາດຕາການທີ່ຖືກເຮັດກ່ອນຫນ້າເພື່ອຈະຫລີກເວັ້ນອັນຕະຣາຍທີ່ອາດຈະເປັນໄປໄດ້ |
| ຄວາມຄິດຮ້າຍໃສ່ | ການທຳການຕັດສິນ ຫລື ການເຮັດຄວາມເຫັນໄປໃນທາງບໍ່ດີອອກມາ, ໂດຍສະເພາະແລ້ວເມື່ອເຮັດຂຶ້ນມາໂດຍບໍ່ມີຄວາມຄິດ ຫລື ຄວາມຮູ້ |
| ຈຸດເຂັ່ງຕຶງ | ບໍຣິເວນຢູ່ໃນຮ່າງກາຍບ່ອນທີ່ກະດູກເຮັດໃຫ້ມີຄວາມເຂັ່ງຕຶງຫລາຍທີ່ສຸດໃສ່ກ້າມເນື້ອ ແລະ ຜີວຫນັງ |
| Pressure ulcers | ການແຕກແຍກ ຫລື ການບາດເຈັບຂອງຜີວຫນັງຊຶ່ງເກີດມາຈາກຄວາມກົດດັນ ຫລື ການສຽດສີກັນ ຊຶ່ງເຮັດມີຄວາມເສັຽຫາຍໃຫ້ຜີວຫນັງ ແລະ ກ້າມເນື້ອຢູ່ກ້ອງມັນ |
| ຄວາມລັບສ່ວນຕົວ | ທີ່ຈະກັ້ນຈາກສາຍຕາເມື່ອຊ່ວຍເຫລືອນຳການເບິ່ງແຍງດູແລສ່ວນຕົວ ຫລື ບໍ່ເວົ້າເຖິງກ່ຽວກັບເຣື່ອງສ່ວນຕົວຂອງລູກຄ້າ |
| ການແກ້ໄຂບັນຫາ | ການດຳເນີນການທີ່ຖືກໃຊ້ເພື່ອຈະແກ້ໄຂນຳສະພາບການທີ່ຫຍຸ້ງຍາກ ຫລື ສັບສົນ |
| ວິທີດຳເນີນການ | ຂັ້ນຕອນທີ່ຖືກຕ້ອງຂອງການກະທຳສິ່ງໃດສິ່ງນຶ່ງ |
| ແບບນັກວິຊາການ | ການສະແດງກິຣິຍາທ່າທາງອອກມາທີ່ໃຫ້ກຽດ, ສົມຄວນ, ແລະ ແບບກິຈການຄ້າຢູ່ບ່ອນເຮັດວຽກ |
| ຂອບເຂດວຽກງານ | ຂອບເຂດເຫມາະສົມໃນຄວາມສັມພັນຂອງວຽກງານ |
| ການເປັນແບບນັກວິຊາການ | ການປະຕິບັດຕາມມາດຕະຖານສູງຂອງການປະພຶດສ່ວນຕົວ |
| ອົງຄະທຽມ | ພາກສ່ວນຂອງຮ່າງກາຍທຽມເຊັ່ນວ່າຂາ, ແຂນ, ນົມ, ຫລື ຕາ |
| Protective barriers | ສິ່ງປົກຄຸມເພື່ອປ້ອງກັນການຕິດຕໍ່ມາຂອງເຊື້ອໂຣກເຊັ່ນວ່າຊົບມື, ຫນ້າກາກ, ແວ່ນຕາ ຫລື ເສື້ອຄຸມ. ຍັງຖືກເອີ້ນອີກຄືກັນວ່າແມ່ນອຸບປະກອນປ້ອງກັນສ່ວນຕົວ ຫລື PPE |
| ທາງດ້ານຈິດໃຈ | ກ່ຽວພັນນຳຈິດໃຈຂອງບຸກຄົນ |

| | |
|---|---|
| ທາງດ້ານຈິດສັງຄົມ | ກ່ຽວພັນນຳຄວາມຢູ່ດີມີແຮງທາງດ້ານຄວາມຮູ້ສຶກ, ຈິດໃຈ, ແລະ ສັງຄົມຂອງບຸກຄົນ |
| ກ່ຽວກັບປອດ | ອ້າງອີງເຖິງປອດ |
| ຊີບພະຈອນ | ການເຕັ້ນຂອງເສັ້ນເລືອດຊຶ່ງເກີດມາຈາກການຫົດຕົວຂອງຫົວໃຈໃນເວລາມັນປ້ຳເລືອດ |

# Q

| | |
|---|---|
| ພາວະແຂນຂາອັມມະພາດ | ການເປັນອັມມະພາດຈາກຄໍລົງມາ |

# R

| | |
|---|---|
| ຊ່ວງຣະຍະຂອງການເຫນັງຕີງ | ອີຕໍ່ສາມາດເຫນັງຕີງໄດ້ຫລາຍເທົ່າໃດ |
| ການພັກຟື້ນ | ການປົວແປງຄວາມສາມາດທາງຮ່າງກາຍ ແລະ/ຫລື ຈິດໃຈຂອງບຸກຄົນ |
| ການລາຍງານ | ການຕິດຕໍ່ສື່ສານຣາຍຣະອຽດສຳຄັນ |
| ແຫລ່ງຊ່ວຍເຫລືອ | ການບໍຣິການ ແລະ ຣາຍຣະອຽດທີ່ມີໄວ້ໃຫ້ |
| ຄວາມນັບຖື | ການເຮັດນຳຄົນໃດຄົນນຶ່ງດ້ວຍຄວາມນັບຖື |
| ການຫາຍໃຈ | ການຫາຍໃຈ, ລວມທັງການຫາຍໃຈເຂົ້າ, ຫລື ການດູດອາກາດເຂົ້າ, ແລະ ການຫາຍໃຈອອກ, ຫລື ການເອົາອາກາດອອກ |
| ຣະບົບການຫາຍໃຈ | ກຸ່ມຂອງອະວັຍຍະວະຂອງຮ່າງກາຍທີ່ປະຕິບັດຫນ້າທີ່ຂອງການຫາຍໃຈ; ຣະບົບນຳເອົາອອກຊີເຈັນເຂົ້າໄປໃນຮ່າງກາຍ ແລະ ເອົາຄາຣບອນດ໌ດາຍອອກຊາຍດ໌ອອກໄປຖິ້ມ |
| Restraint | ອຸບປະກອນ ຫລື ການກະທຳທີ່ມັດກຸມ, ຫລື ການຈຳກັດການເຫນັງຕີງຂອງລູກຄ້າ. ການໃຊ້ສິ່ງໃດສິ່ງນຶ່ງເພື່ອຈະມັດກຸມແມ່ນຜິດກົດຫມາຍ |
| ສິດທິ | ມາດຕະຖານຂອງຄວາມຍຸຕິທັມ, ກົດຫມາຍ, ແລະ ສິນທັມ, ຕົວຢ່າງແມ່ນສິດທິຕໍ່ຄວາມເປັນຄວາມລັບສ່ວນຕົວ ແລະ ສິດທິທີ່ຈະປະຕິເສດການປິ່ນປົວພະຍາບານ |
| ບົດບາດ | ສິ່ງທີ່ບຸກຄົນຄາດວ່າຈະເຮັດ ແລະ ຈະບໍ່ເຮັດ |
| ສິ່ງເຮັດປະຈຳ | ຕາຕະລາງເວລາ ຫລື ທິນທາງການກະທຳແນວໃດແນວນຶ່ງ |

# S

| | |
|---|---|
| ອັນຕະຣາຍຂອງຄວາມປອດພັຍ | ສະພາບທີ່ເປັນອັນຕະຣາຍ ຫລື ອຸບປະສັກຕໍ່ຄວາມປອດພັຍ |
| ພະຍາດແຊລມອນແນລາ | ບັກເທເຣັຽທີ່ຖືກກິນເຂົ້າໄປໂດຍຜ່ານອາຫານ ຫລື ນ້ຳປົນເປື້ອນເຮັດໃຫ້ເກີດມີການຕິດເຊື້ອໂຣກໃນລຳໃສ້ນ້ອຍ |
| Sanitize | ເພື່ອຈະທຳຄວາມສະອາດ ແລະ ຂ້າເຊື້ອໂຣກ |
| ການຜະລິດນ້ຳ | ເພື່ອຈະຜະລິດ ແລະ ປ່ອຍນ້ຳອອກມາ |
| ຢູ່ປະຈຳທີ່ | ວິຖີການດຳເນີນຊີວິດຊຶ່ງລວມເອົາແຕ່ກິຈກັມທາງຮ່າງກາຍເບົາໆທີ່ພົວພັນນຳຊີວິດແຕ່ລະວັນທັມມະດາ |
| ການຊັກບ້າຫມູ | ການທຳງານບໍ່ປົກກະຕິຂອງສະມອງຊຶ່ງກໍ່ໃຫ້ເກີດມີການຊັກ |
| Self Directed Care | ເມື່ອເວລາລູກຄ້າຢູ່ໃນເຮືອນຊີ້ນຳຜູ້ໃຫ້ການເບິ່ງແຍງດູແລສ່ວນຕົວພຽງແຕ່ເພື່ອຈະຊ່ວຍເຂົາເຈົ້ານຳພາລະຫນ້າທີ່ກ່ຽວພັນນຳສຸຂະພາບເທົ່ານັ້ນ. ອັນນີ້ບໍ່ຕ້ອງມີການແຕ່ງຕັ້ງຈາກນາຍຫມໍ |

| | |
|---|---|
| ປະສາດສັມຜັດ | ກ່ຽວພັນນຳຍານຂອງການເບິ່ງ, ການຟັງສຽງ, ການຈັບບາຍ, ການຊີມຣົດຊາດ, ແລະ ການດົມກິ່ນ |

| | |
|---|---|
| ສະລຸບຄວາມການບໍລິການ | ພາກສ່ວນນຶ່ງຂອງແຜນການປິ່ນປົວຂອງກົມ DSHS ຊຶ່ງບັນທຶກລາຍລະອຽດການຕິດຕໍ່, ຕາຕະລາງເວລາຂອງຜູ້ເບິ່ງແຍງດູແລ, ແລະ ຈຸດເປົ້າຫມາຍຂອງລູກຄ້າ |
| ການຣົບກວນທາງເພດ | ການສໍາຜັດທາງເພດທີ່ບໍ່ຕ້ອງການໃນທຸກໆຮູບແບບ |
| ເຣື່ອງເພດ | ລັກສະນະສະເພາະ ຫລື ຄວາມຮູ້ສຶກກ່ຽວພັນກັບການສົມສູ່ທາງເພດ |
| ການຕື່ນຕົກໃຈ | ຖານະຂອງການລົ້ມລົງຍ້ອນຜົນມາຈາກຈໍານວນຂອງເລືອດ ແລະ ຄວາມກົດດັນຂອງເລືອດລຸດລົງ, ໂດຍທົ່ວໄປແລ້ວເກີດມາຈາກການບາດເຈັບຮ້າຍແຮງເຊັ່ນວ່າອາການຕົກເລືອດ ຫລື ໄຟໃຫມ້ຢູ່ຫລາຍພາກສ່ວນຂອງຮ່າງກາຍ; ຍັງອາດຈະເປັນຜົນມາຈາກການຕົກໃຈ ຫລື ຄວາມເຈັບປວດໄດ້ອີກຄືກັນ |
| ຜົນຂ້າງຄຽງ | ຜົນສະທ້ອນຂອງຢາ ຫລື ການບໍາບັດທີ່ບໍ່ປາດຖະນາສໍາລອງ ຫລື ຕາມທັມມະດາ |
| ຣະບົບໂຄງຮ່າງກະດູກ | ກະດູກ ແລະ ບ່ອນຕິດຕໍ່ຣະຫວ່າງກະດູກຊຶ່ງໃຫ້ໂຄງຮ່າງສໍາລັບຮ່າງກາຍ |
| ຜິວຫນັງ | ອະວັຍຍະວະຂອງຮ່າງກາຍທີ່ປົກຄຸມຮ່າງກາຍ ແລະ ປ້ອງກັນມັນ,<br>ປະກອບດ້ວຍເນື້ອຫລາຍຊັ້ນ |
| Skin breakdown | ຮອຍແດງ, ບ່ອນເສັຽຫາຍ ຫລື ແຕກແຫງຂອງຜິວຫນັງຕ່າງໆ<br>ເຮັດໃຫ້ມີການສ່ຽງຕໍ່ການຕິດເຊື້ອໂຣກ ແລະ ການບາດເຈັບຕໍ່ໄປ |
| ການບົວຣະບັດຜິວຫນັງ | ການລ້າງໃຫ້ສະອາດ ແລະ ການປ້ອງກັນຜິວຫນັງ |
| ຄວາມສົມບູນຂອງຜິວຫນັງ | ຜິວຫນັງທີ່ປາດສະຈາກບາດແຜແນວໃດ |
| ແຜ່ນເລື່ອນ | ແຜ່ນເລື່ອນທີ່ຖືກໃຊ້ເພື່ອຈະເຄື່ອນຍ້າຍບຸກຄົນຖ້າຫາກວ່າມັນບໍ່ມີໂອກາດທີ່ຈະມີການບາດເຈັບໃນກະດູກສັນຫລັງ, ຍັງຖືກເອີ້ນອີກວ່າແມ່ນແຜ່ນເຄື່ອນຍ້າຍ |
| ເສັ້ນປະສາດໃນຫລັງ | ອະວັຍຍະວະໃຫຍ່ອັນນຶ່ງຂອງຣະບົບເສັ້ນປະສາດ, ມັນຢູ່ໃນກະດູກສັນຫລັງ ແລະ<br>ນໍາເອົາຂ່າວສານຈາກສະມອງໄປສູ່ພາກສ່ວນອື່ນໆຂອງຮ່າງກາຍ, ແລະ<br>ຈາກພາກສ່ວນຂອງຮ່າງກາຍກັບຄືນໄປຫາສະມອງ;<br>ມັນຍັງຖືກເອີ້ນອີກຄືກັນວ່າແມ່ນກະດູກຫລັງ |
| ວິນຍານ | ທີ່ກ່ຽວພັນນໍາວິນຍານ ຫລື ຈິດວິນຍານ, ສັກສິດ, ຫລື ສາສະນາ |
| ຂີ້ກະເທີ່ຖົ່ມອອກມາ | ຂີ້ກະເທີ່ໄອອກມາຈາກປອດ |
| ຄວາມລະວັງມາດຕະຖານ | ພາກປະຕິບັດທີ່ຖືກຮັບເອົາໄດ້ຖືກໃຊ້ເພື່ອຈະຫລີກເວັ້ນເຊື້ອໂຣກທີ່ຖືກແຜ່ພາຍຜ່ານເສັ້ນເລືອດ, ນໍ້າຂອງຮ່າງກາຍ, ຜິວຫນັງຢູ່ນອກໂຕ ຫລື ຂີ້ມູກ |
| ຜ້າພັນບາດຂ້າເຊື້ອໂຣກ | ຜ້າປົກປ້ອງກັນ, ບໍ່ມີເຊື້ອໂຣກ, ໃສ່ບ່ອນບາດເຈັບ |
| ການຂ້າເຊື້ອໂຣກ | ການດໍາເນີນການທໍາລາຍແມ່ພະຍາດນ້ອຍທັງຫມົດ, ລວມທັງແຊລ໌ສືບພັນ |
| ກະດູກຫນ້າເອິກ | ກະດູກນົມ |
| ຂີ້ | ອຸດຈາຣະ, ການຂັບຖ່າຍອຸດຈາຣະ |
| ຊ່ອງເປີດນ້ອຍໆ | ຊ່ອງເປີດເຮັດເອົາທີ່ຕິດຕໍ່ການຜ່ານຮ່າງກາຍອອກໄປຂ້າງນອກ; ເຊັ່ນວ່າໂຄໂລສໂຕມີ, ແຕຣກີໂອໂຕມີ, ອາຍລີໂອໂຕມີ ຫລື ຢູໂຣສໂຕມີ |
| ຄວາມຕຶງຄຽດ | ສະພາບການ ຫລື ຄວາມຄິດຕ່າງໆທີ່ເຮັດໃຫ້ທ່ານຫນັກໃຈ, ໃຈຮ້າຍ, ຫລື ກະວົນກະວາຍ |

| | |
|---|---|
| ເສັ້ນເລືອດຕັນໃນສະໝອງ | ການລະເບີດ ຫລື ການຕັນໃນເສັ້ນເລືອດຢູ່ໃນສະໝອງເຮັດໃຫ້ພາກສ່ວນຂອງສະໝອງຂາດການໝູນວຽນຂອງເລືອດ, ຍັງຖືກເອີ້ນອີກຄືກັນວ່າແມ່ນສະໝອງແຕກ |
| ການບັນທຶກທັສນະສ່ວນຕົວ | ການຂຽນລົງໄປຄວາມຮູ້ສຶກສ່ວນຕົວຂອງທ່ານ, ຄວາມປະທັບໃຈ, ຫລື ການແປຄວາມຫມາຍ |
| ອາການ | ຫລັກຖານຂອງພະຍາດ, ການເຈັບປ່ວຍ ຫລື ສະພາບເຈັບປ່ວຍ |

# T

| | |
|---|---|
| ອຸນຫະພູມ | ການວັດແທກອາຍອຸ່ນ |
| ເສັ້ນເອັນ | ເສັ້ນແຫນັນຫນາຂອງເນື້ອຕິດກັນທີ່ມັດກ້າມເນື້ອໃສ່ພາກສ່ວນຂອງຮ່າງກາຍອື່ນໆ |
| ການຮັກສາໂຣກ | ຢາ ຫລື ກິຈກັມທີ່ຊ່ວຍເຫລືອຄົນໃດຄົນນຶ່ງໃຫ້ພັກຟື້ນ ຫລື ຫາຍປ່ວຍ |
| ເຄື່ອງວັດອຸນຫະພູມ | ເຄື່ອງມືສຳລັບການວັດແທກອຸນຫະພູມ |
| ສຽງສູງຕ່ຳ | ສຽງ ຫລື ຣະດັບສຽງຂອງຄຳເວົ້າທີ່ທ່ານເວົ້າອອກມາ |
| ເຄື່ອງມື | ເທັກນິກ ຫລື ສິ່ງຂອງທີ່ຊ່ວຍທ່ານສຳເຣັດພາລະກິດ |
| ແນວເປັນພິດ | ທາດສານເປັນພິດ, ສາມາດຖືກເຮັດອອກມາໂດຍບັກເທຣັຽ, ແລະ ເຮັດໃຫ້ມີການເຈັບປ່ວຍ ຫລື ເປັນພະຍາດ |
| ສາຍແອວຍ້າຍ/ສາຍແອວພາຍ່າງ<br>Transfer belt/gait belt | ສາຍແອວໃສ່ອ້ອມແອວເພື່ອຈະຊ່ວຍໃນການຍ້າຍໄປມາ ຫລື ການຍ່າງ |
| ແຜ່ນຍ້າຍ | ແຜ່ນແປທີ່ເຮັດໃຫ້ຄົນເລື່ອນຈາກຫນ້າພຽງຣະດັບພຽງບ່ອນນຶ່ງໄປຫາອີກບ່ອນນຶ່ງ |
| Transfers | ການຍົກຍ້າຍບຸກຄົນຈາກບ່ອນນຶ່ງໄປຫາອີກບ່ອນນຶ່ງ; ຕົວຢ່າງວ່າຈາກຕຽງນອນໄປຫາຕັ່ງນັ່ງລໍ້ຊຸກ |
| ສົ່ງຜ່ານ | ການກະທຳຂອງການຂົນສົ່ງສິ່ງໃດສິ່ງນຶ່ງຈາກຄົນນຶ່ງ ຫລື ບ່ອນນຶ່ງໄປຫາອີກບ່ອນນຶ່ງ |
| ການເດີນທາງໄປຫາການປິ່ນປົວພະຍາບານ | ການຕິດຕາມໄປນຳ ແລະ/ຫລື ການຂົນສົ່ງລູກຄ້າໄປຫາຫ້ອງການຂອງທ່ານຫມໍຢູ່ໃນເຂດທ້ອງຖິ່ນ ເພື່ອຈະໄດ້ຮັບການກວດ ຫລື ການປິ່ນປົວພະຍາບານ |
| ໂຣກປອດແຫ້ງ (TB) | ພະຍາດແຜ່ພາຍທາງອາກາດທີ່ເກີດມາຈາກບັກເທຣັຽ, ສະທ້ອນເຖິງປອດໂດຍສະເພາະ |
| ເນື້ອງອກ | ການເຕີບໂຕຜິດປົກກະຕິຢູ່ໃນ ຫລື ຢູ່ເທິງຮ່າງກາຍ; ບໍ່ສາມາດເປັນອັນຕະຣາຍ, ຫລື ຮ້າຍແຮງ. ເນື້ອງອກຮ້າຍແຮງຍັງຖືກເອີ້ນອີກວ່າແມ່ນ “ໂຣກມະເລັງ” |

# U

| | |
|---|---|
| ຫມົດສະຕິ | ບໍ່ຮູ້ສຶກຕົວ, ບໍ່ສາມາດທີ່ຈະຕອບຂານ |
| ຄວາມລະມັດລະວັງທົ່ວໄປ | ມາດຕາການຂອງຄວາມປອດພັຍທີ່ຖືກໃຊ້ເມື່ອເວລາເຮັດນຳເລືອດ ຫລື ນ້ຳຂອງຮ່າງກາຍ |
| ການກວດເບິ່ງນ້ຳຍ່ຽວ | ການກວດນ້ຳຍ່ຽວຢູ່ຫ້ອງວິຈັຍສຳລັບຈຸດປະສົງຂອງການກວດພະຍາດ |
| ແນວຍ່ຽວໃສ່ | ຖົງບັນຈຸທີ່ຖືກໃຊ້ສຳລັບການຍ່ຽວ |
| ທໍ່ຍ່ຽວ | ທໍ່ສອດເຂົ້າໄປໃນພົກຍ່ຽວເພື່ອຈະຣະບາຍນ້ຳຍ່ຽວອອກມາ |

| | |
|---|---|
| ບໍ່ສາມາດທີ່ຈະອົດກັ້ນຍ່ຽວໄດ້ | ຄວາມບໍ່ສາມາດທີ່ຈະຄວບຄຸມການທຳງານຂອງພົກຍ່ຽວ |
| ລະບົບການຍ່ຽວ | ກຸ່ມຂອງອະວັຍຍະວະລວມຊຶ່ງມີຫນ້າທີ່ຈະເຮັດນ້ຳຍ່ຽວ ແລະ ເທອອກມາຈາກຮ່າງກາຍ |
| ຊ່ອງທາງແລ່ນຂອງນ້ຳຍ່ຽວ | ອະວັຍຍະວະຂອງຮ່າງກາຍທີ່ຜະລິດ ແລະ ລະບາຍນ້ຳຍ່ຽວອອກໄປ, ລວມເອົາຫມາກໄຂ່ຫລັງ, ທໍ່ປັດສະວະຜູ້ຊາຍ, ພົກຍ່ຽວ, ແລະ ທໍ່ປັດສະວະຜູ້ຍິງ |
| ການຕິດເຊື້ອໂຣກໃນທໍ່ຍ່ຽວ (UTI) | ການຕິດເຊື້ອໂຣກຂອງພາກສ່ວນນຶ່ງ ຫລື ຫລາຍພາກສ່ວນ ຫລື ທໍ່ລຳລຽງນ້ຳຍ່ຽວ, ອາດຈະບໍ່ມີອາການ |
| ການຍ່ຽວ | ການດຳເນີນການກຳຈັດນ້ຳຍ່ຽວຈາກພົກຍ່ຽວ |
| ນ້ຳຍ່ຽວ | ນ້ຳເສັຽຈາກຫມາກໄຂ່ຫລັງ |

## V

| | |
|---|---|
| ຄຸນຄ່າ | ການປະພຶດ ຫລື ປະເພນີອັນໃດອັນນຶ່ງທີ່ຖືກເຫັນວ່າສຳຄັນ |
| ເສັ້ນເລືອດ | ເສັ້ນເລືອດທີ່ສົ່ງສົ່ງເລືອດໄປຫາຫົວໃຈ |
| ປາກເປົ່າ | ຄຳເວົ້າທີ່ລົມກັນ |
| ກະດູກສັນຫລັງ | ກະດູກຂອງສັນຫລັງ |
| ເຊື້ອວາຍຣັສ | ສິ່ງມີຊີວິດທີ່ເຮັດພະຍາດອອກມາ,ທີ່ຮູ້ຈັກກັນຫນ້ອຍທີ່ສຸດ |
| ການວາດພາບເບິ່ງ | ການເຫັນແນວໃດແນວນຶ່ງຢູ່ໃນໃຈຂອງທ່ານ |
| ຄວາມບົກພ່ອງໃນການເບິ່ງ | ການເປັນຕາບອດ ຫລື ການເສັຽສາຍຕາ |
| ຖ່າຍເບົາ | ຍ່ຽວ |
| ການຮາກອອກ | ການຮາກສິ່ງຢູ່ໃນກະເພາະອາຫານອອກຈາກປາກ |
| ອ່ອນແອ | ເຈັບປວດ, ຈຸງຫົວ, ຫລື ໂຈມຕີໄດ້ງ່າຍໆ |
| ຜູ້ໃຫຍ່ອ່ອນແອ | ບຸກຄົນຜູ້ທີ່ມີອາຍຸ 60 ປີ, ຫລື ແກ່ກວ່າ, ຜູ້ທີ່ບໍ່ສາມາດປົວຣະປັດຕົນເອງໄດ້ຍ້ອນຄວາມເສັຽອົງຄະດ້ານການທຳງານ, ຈິດໃຈ ຫລື ຮ່າງກາຍ; ຫລື ຜູ້ທີ່ມີອາຍຸ 18 ປີ ຫລື ແກ່ກວ່າຜູ້ທີ່:<br>ອາສັຍຢູ່ໃນເຮືອນຄອບຄົວຜູ້ໃຫຍ່, ເຮືອນກິນນອນ, ຫລື ສະຖານທີ່ເບິ່ງແຍງຜູ້ເຖົ້າ; ໄດ້ຮັບການບໍຣິການເບິ່ງແຍງດູແລສ່ວນຕົວຢູ່ໃນເຮືອນຂອງເຂົາເຈົ້າເອງ;<br>ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ; ຫລື ບໍ່ມີຄວາມສາມາດເຮັດວຽກໄດ້ |

## W

| | |
|---|---|
| ແນວພາຍ່າງ | ແນວອູ້ມຊູທີ່ຖືກໃຊ້ສຳລັບການຍ່າງ |
| ນ້ຳຫນັກ | ການວັດແທກຄວາມຫນັກ |
| ຕັ່ງມີລໍ້ | ຕັ່ງນັ່ງຖືກຕິດຕັ້ງໃສ່ລໍ້ |
| ຟືນດັງໄຟ | ການຜ່າຕັດ, ການກອງກັນຂຶ້ນ ຫລື ການຂົນຟືນໃຫ້ລູກຄ້າ ເມື່ອເວລາຟືນດັງໄຟເປັນແຫລ່ງມາແຫລ່ງດຽວຂອງນ້ຳມັນເຊື້ອເພີງສຳລັບອາບອຸ່ນ ຫລື ການຄົວກິນ, ແມ່ນຈຳກັດໃສ່ຟືນດັງໄຟຢູ່ໃນເຮືອນ ແລະ ບໍ່ລວມເອົາເລື່ອຍເປັນໂສ້ ຫລື ກົກໄມ້ລົ້ມລົງ |
| ບາດແຜ | ຮອຍແຕກແຫງຕ່າງໆໃນຜິວຫນັງ ຫລື ອະວັຍຍະວະ |